ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----===000===-----

ສຳນັກງານນາຍົກລັດຖະມົນຕີ

ເລກທີ 221 /ນຍ.

ນະຄອນຫຼວງວຽງຈັນ, ວັນທີ 17.08.2007.

# ດຳລັດ

## ວ່າດ້ວຍການປະກາດໃຊ້ ແລະ ຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2007-2008

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6/5/2003.
- ອີງຕາມ ກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 02/ສພຊ, ລົງວັນທີ 26/12/2006.
- ອີງຕາມ ມະຕິຂອງກອງປະຊຸມຄັ້ງທີ3 ຂອງສະພາແຫ່ງຊາດ ຊຸດທີ VI, ສະບັບເລກທີ 038/ ສພຊ-VI, ລົງວັນທີ 3/7/2007 ວ່າດ້ວຍການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2007-2008.

## ນາຍົກລັດຖະມົນຕີ ອອກດຳລັດ:

ມາດຕາ 1. ປະກາດໃຊ້ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2007-2008, ເລີ່ມແຕ່ວັນທີ 01 ຕຸລາ ປີ 2007 ເຖິງວັນທີ 30 ກັນຍາ ປີ 2008 ຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ.

ມາດຕາ 2. ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2007- 2008 ແມ່ນແຜນຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ, ມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VI ໃຫ້ປະກົດຜົນເປັນຈິງ, ໂດຍມີທິດທາງ ແລະ ໜ້າທີ່, ບັນດາຄາດໝາຍຕົ້ນຕໍ ແລະ ການດຸ່ນດ່ຽງໃຫຍ່ ຂອງເສດຖະກິດມະຫາພາກ; ຄາດໝາຍການລຶບລ້າງຄວາມທຸກຍາກ ແລະ ຫຼຸດຜ່ອນການຖາງປ່າ-ເຮັດໄຮ່; ກຳນົດໂຄງປະກອບການພັດທະນາຕາມຂະແໜງການ ແລະ ການພັດທະນາເຂດແຄວັນ; ກຳນົດແຜນງານໂຄງການ, ແຜນເງິນ, ແຜນຄົນ, ບັນດາມາດຕະການ ແລະ ວິທີການຕົ້ນຕໍ ເພື່ອຈັດຕັ້ງປະຕິບັດຈຸດໝາຍລວມ, ທິດທາງ ແລະ ຄາດໝາຍສູ້ຊົນ ທີ່ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI ( 2006-2010 ).

**ມາດຕາ 3. ຄາດໝາຍສູ້ຊົນດ້ານເສດຖະກິດມະຫາພາກ ໃນສົກປີ 2007-2008 ມີດັ່ງນີ້ :**

- ລວມຍອດຜະລິດຕະພັນພາຍໃນ (GDP) ທຽບໃສ່ສົກປີ 2006-2007 ເພີ່ມຂຶ້ນ 8% (ມູນຄ່າ GDP ຕາມລາຄາໃນປີ ແມ່ນ 43.287 ຕື້ກີບ); ໃນນັ້ນ,

  + ຍອດຜະລິດຕະພັນກະສິກຳ-ປ່າໄມ້ ເພີ່ມຂຶ້ນ 3,0%, ກວມ 38,6% ຂອງ GDP;
  + ຍອດຜະລິດຕະພັນອຸດສາຫະກຳ ເພີ່ມຂຶ້ນ 15,8%, ກວມ 35,7% ຂອງ GDP;
  + ຍອດຜະລິດຕະພັນການບໍລິການ ເພີ່ມຂຶ້ນ 7,0%, ກວມ 25,7% ຂອງ GDP.

- GDP ສະເລັ່ຍຕໍ່ຫົວຄົນໃຫ້ໄດ້ຜູ້ໜຶ່ງປະມານ 7,28 ລ້ານກີບ ຫລື ເທົ່າກັບປະມານ 728 ໂດລາສະຫະລັດ ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 7,5%.
- ເກັບລາຍຮັບເຂົ້າງົບປະມານທັງໝົດໃຫ້ໄດ້ໃນລະດັບ 15,22% ຂອງມູນຄ່າ GDP; ລາຍຈ່າຍງົບປະມານທັງໝົດໃຫ້ຢູ່ໃນລະດັບ 20,68% ຂອງ GDP, ເຮັດໃຫ້ຂາດດຸນຢູ່ໃນລະດັບ 5,4% ຂອງ GDP.
- ຮັກສາອັດຕາເງິນເຟີ້ສະເລ່ຍໃຫ້ຢູ່ໃນລະດັບຕໍ່າກວ່າ 6% ແລະ ຄຸ້ມຄອງອັດຕາແລກປ່ຽນໃຫ້ມີຄວາມສະຫງົບໂດຍພື້ນຖານ.
- ເຮັດໃຫ້ການສົ່ງອອກສິນຄ້າທີ່ຜະລິດພາຍໃນປະເທດເພີ່ມຂຶ້ນ ແລະ ຫຼຸດຜ່ອນການຂາດດຸນການຄ້າກັບຕ່າງປະເທດໃຫ້ຫຼຸດລົງ ຢູ່ໃນລະດັບ 5% ຂອງ GDP, ຄຸ້ມຄອງດຸນການຊໍາລະກັບຕ່າງປະເທດໃຫ້ຢູ່ໃນລະດັບທີ່ເໝາະສົມ.
- ເອົາໃຈໃສ່ແກ້ໄຂຄວາມທຸກຍາກ, ເຮັດໃຫ້ຕົວເລກອັດຕາຄວາມທຸກຍາກຫຼຸດລົງ 3%.
- ຊຸກຍູ້ສົ່ງເສີມການລົງທຶນທົ່ວສັງຄົມໃຫ້ໄດ້ປະມານ 32% ຂອງ GDP, ໃນນີ້: ການລົງທຶນຂອງລັດໃຫ້ໄດ້ປະມານ 8% ຂອງ GDP.
- ຫຼຸດຜ່ອນເນື້ອທີ່ຖາງປ່າເຮັດໄຮ່ແບບເລື່ອນລອຍຈາກ 14.400 ເຮັກຕາ ໃຫ້ຍັງເຫຼືອບໍ່ເກີນ 10.000 ເຮັກຕາ ແລະ ຫຼຸດຜ່ອນຄອບຄົວຖາງປ່າເຮັດໄຮ່ຈາກ 21.000 ຄອບຄົວ ໃຫ້ຍັງເຫຼືອບໍ່ເກີນ 15.000 ຄອບຄົວ.
- ສູ້ຊົນຜະລິດເຂົ້າໃຫ້ໄດ້ 2,87 ລ້ານໂຕນ.

**ມາດຕາ 4. ຄາດໝາຍສູ້ຊົນຕົ້ນຕໍດ້ານສັງຄົມ ມີດັ່ງນີ້:**

- ອັດຕາເຂົ້າຮຽນລວມໃນຊັ້ນອະນຸບານ ໃຫ້ໄດ້ 13,4%, ອັດຕາເຂົ້າຮຽນສຸດທິຂອງຊັ້ນປະຖົມ 87%, ມັດທະຍົມຕອນຕົ້ນ 64,9%, ມັດທະຍົມຕອນປາຍ 42,5%; ເພີ່ມອັດຕາການຮູ້ໜັງສືຂອງຜູ້ໃຫຍ່ອາຍຸ 15 ປີຂຶ້ນໄປ ໃຫ້ໄດ້ 76%.
- ສະໜອງນໍ້າສະອາດແກ່ປະຊາຊົນໃຫ້ໄດ 72%, ສັກຢາກັນພະຍາດໃຫ້ໄດ້ 80%, ສັກຢາກັນບາດທະຍັກຂອງແມ່ຍິງໃຫ້ໄດ້40%, ຫລຸດຜ່ອນການຕິດເຊື້ອວັນນະ ໂລກໃຫ້ໄດ້ 100 ຄົນ ຕໍ່ປະຊາກອນ 100.000 ຄົນ.
- ເຝິກວິຊາຊີບໃຫ້ແກ່ນັກຮຽນທີ່ຮຽນຈົບມັດທະຍົມຕອນຕົ້ນ ແລະ ຕອນປາຍ ໃຫ້ໄດ້ 13.860 ຄົນ, ຈັດຫາວຽກເຮັດງານທຳ ໃຫ້ໄດ້ 108.000 ຄົນ, ໃນນີ້ ຈັດສົ່ງໄປອອກແຮງງານຢູ່ຕ່າງປະເທດ 25.350 ຄົນ ແລະ ຂຶ້ນທະບຽນຜູ້ຫວ່າງງານ ໃຫ້ໄດ້ 78.000 ຄົນ.

ມາດຕາ 5 . ໃຫ້ສູ້ຊົນປະຕິບັດແຜນລາຍຮັບ ແລະ ລາຍຈ່າຍງົບປະມານປະຈຳປີ ຕາມຕົວເລກທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາ ໃຫ້ປະກົດເປັນຈິງ ຄື :

**5.1 ລາຍຮັບງົບປະມານ.**

| | | |
|---|---|---|
| - ລວມຍອດລາຍຮັບງົບປະມານທັງໝົດ (ນັບທັງທຶນຊ່ວຍເຫລືອລ້າ) | 6.599 | ຕື້ກີບ. |
| ໃນນັ້ນ: + ລາຍຮັບງົບປະມານພາຍໃນ | 6.030 | ຕື້ກີບ. |
| • ລາຍຮັບຈາກສ່ວຍສາອາກອນ | 2.615 | ຕື້ກີບ. |
| • ລາຍຮັບຈາກພາສີຂາເຂົ້າ-ຂາອອກ | 1.820 | ຕື້ກີບ. |
| • ລາຍຮັບຈາກພາສີທີ່ດິນ | 55 | ຕື້ກີບ. |
| • ລາຍຮັບຈາກຊັບສິນຂອງລັດ | 1.390 | ຕື້ກີບ. |
| • ລາຍຮັບຈາກຊັບພະຍາກອນໄມ້ | 150 | ຕື້ກີບ. |
| + ລາຍຮັບຈາກການກູ້ຢືມ ແລະ ຊ່ວຍເຫລືອລ້າ | 569 | ຕື້ກີບ. |

**5.2 ລາຍຈ່າຍງົບປະມານ.**

| | | |
|---|---|---|
| - ແຜນລາຍຈ່າຍງົບປະມານທັງໝົດ | 8.884 | ຕື້ກີບ. |
| ໃນນັ້ນ: 1) ລາຍຈ່າຍເງິນເດືອນ | 1.956 | ຕື້ກີບ. |
| 2) ລາຍຈ່າຍເງິນອຸດໜູນ | 540 | ຕື້ກີບ. |
| 3) ລາຍຈ່າຍບໍລິຫານ - ຊື້ໃໝ່ | 829,901 | ຕື້ກີບ. |
| 4) ລາຍຈ່າຍດັດສົມສິ່ງເສີມ | 472,099 | ຕື້ກີບ. |
| 5) ລາຍຈ່າຍເງິນແຮ ແລະ ບັງເອີນ | 50 | ຕື້ກີບ. |
| 6) ລາຍຈ່າຍເງິນສະສົມຂອງລັດຖະບານ | 50 | ຕື້ກີບ. |
| 7) ລາຍຈ່າຍເງິນປະກອບສ່ວນ-ບຳລຸງອົງການຈັດຕັ້ງສາກົນ | 27 | ຕື້ກີບ. |
| 8) ລາຍຈ່າຍຊຳລະໜີ້ສິນ | 1.517 | ຕື້ກີບ; |
| ໃນນັ້ນ: | | |
| • ຈ່າຍຊຳລະໜີ້ສິນຕ່າງປະເທດ | 693 | ຕື້ກີບ. |
| • ຈ່າຍຊຳລະໜີ້ສິນພາຍໃນ | 500 | ຕື້ກີບ. |
| • ຈ່າຍຊຳລະຕົ້ນທຶນ ແລະ ດອກເບັ້ຍພັນທະບັດ | 324 | ຕື້ກີບ. |
| 9) ລາຍຈ່າຍການລົງທຶນຂອງລັດ | 3.442 | ຕື້ກີບ; |
| ໃນນັ້ນ: | | |
| • ທຶນຊ່ວຍເຫລືອ ແລະ ກູ້ຢືມຈາກຕ່າງປະເທດ | 2.754 | ຕື້ກີບ. |
| • ຈ່າຍລົງທຶນຂອງລັດພາຍໃນ | 688 | ຕື້ກີບ; |
| ໃນນັ້ນ - ຈ່າຍລົງທຶນປົກກະຕິ | 578,5 | ຕື້ກີບ. |
| - ຈ່າຍໂຄງການບູລະນະທາງຫຼວງແຫ່ງຊາດ | 90 | ຕື້ກີບ. |
| - ຈ່າຍໂຄງການກອງທຶນບູລະນະປ່າໄມ້ | 12 | ຕື້ກີບ. |
| - ຈ່າຍກໍ່ສ້າງຕຶກ UNDP | 7,5 | ຕື້ກີບ. |

5.3 ແຫຼ່ງວຸ່ນດ່ຽງງົບປະມານທັງໝົດ 2.285 ຕື້ກີບ.

ໃນນັ້ນ:

- ກູ້ຢືມ ແລະ ຊ່ວຍເຫລືອຈາກຕ່າງປະເທດ 2.235 ຕື້ກີບ.
- ພັນທະບັດຄັງເງິນ 50 ຕື້ກີບ.

ມາດຕາ 6: ກ່ຽວກັບການລົງທຶນຂອງລັດ, ໃຫ້ປະຕິບັດດັ່ງນີ້:

6.1. ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ສົກປີ 2007-2008 ຕ້ອງປະຕິບັດຕາມດຳລັດ ເລກທີ 58/ນຍ ຢ່າງເຂັ້ມງວດ; ຫ້າມເດັດຂາດບໍ່ໃຫ້ຂະແໜງການ ແລະ ທ້ອງຖິ່ນ ປະຕິບັດໂຄງການທີ່ບໍ່ນອນໃນແຜນການທີ່ສະພາແຫ່ງຊາດອະນຸມັດ, ເປັນຕົ້ນແມ່ນ ໃຫ້ຍຸດຕິການປະຕິບັດໂຄງການກ່ອນ ແລ້ວຈຶ່ງຂຶ້ນແຜນງົບປະມານຊຳລະຕາມພາຍຫຼັງ. ທຸກອົງການຈັດຕັ້ງ ທີ່ໄດ້ຮັບການເບີກຈ່າຍຈາກງົບປະມານຂອງລັດ ຕ້ອງປະຕິບັດຕາມຮ່ວງລາຍຈ່າຍຂອງແຜນງົບປະມານ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວຢ່າງເຄັ່ງຄັດ; ຖ້າມີການຝ່າຝືນ ຈະຕ້ອງໄດ້ປະຕິບັດວິໄນຢ່າງເຂັ້ມງວດ. ລັດຖະບານຈະບໍ່ຮັບຮູ້ໂຄງການລົງທຶນຂອງລັດ ທີ່ບໍ່ໄດ້ປະຕິບັດຕາມດຳລັດເລກທີ 58/ນຍ.

6.2 ໃຫ້ແຕ່ລະກະຊວງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ອີງໃສ່ແຜນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ (11 ແຜນງານໃຫຍ່, 111 ໂຄງການຈຸດສຸມຂອງລັດຖະບານ), ແຜນພັດທະນາ 5 ປີ (2006-2010) ແລະ ຍຸດທະສາດການພັດທະນາ ຮອດປີ 2020 ຄົ້ນຄວ້າສ້າງເປັນເອກະສານໂຄງການລະອຽດ ສົ່ງໃຫ້ພາກສ່ວນຮັບຜິດຊອບການປະເມີນຜົນເພື່ອດຳເນີນການປະເມີນຄວາມສາມາດເປັນໄປໄດ້ ແລະ ປະສິດທິຜົນຂອງໂຄງການ ແຕ່ຕົ້ນສົກປີເລີຍ ເພື່ອສະເໜີເຖິງພາກສ່ວນທີ່ຮັບຜິດຊອບການສ້າງ ແລະ ຄຸ້ມຄອງແຜນການ ພິຈາລະນາເອົາເຂົ້າແຜນໃນແຕ່ລະປີ, ໂດຍໃຫ້ປະຕິບັດຕາມຂັ້ນຕອນຂອງດຳລັດ ເລກທີ 58/ນຍ ຢ່າງເຂັ້ມງວດ.

6.3 ໃຫ້ຂະແໜງການ ແລະ ທ້ອງຖິ່ນ ຖືເອົາດຳລັດສະບັບນີ້ ເປັນບ່ອນອີງໃນການສ້າງແຜນການລົງທຶນຂອງລັດຂອງຕົນ ສຳລັບສົກປີ 2008-2009. ເລີ່ມແຕ່ສົກປີ 2007-2008 ເປັນຕົ້ນໄປ ທຸກພາກສ່ວນຈະຕ້ອງສົ່ງເອກະສານໂຄງການທີ່ຈະສະເໜີເອົາເຂົ້າແຜນການລົງທຶນຂອງລັດ ໃຫ້ພາກສ່ວນຮັບຜິດຊອບປະເມີນຜົນດຳເນີນການປະເມີນສາກ່ອນ; ຖ້າວ່າຂະແໜງການ ແລະ ທ້ອງຖິ່ນໃດ ຫາກສົ່ງເອກະສານບໍ່ທັນໄລຍະປະເມີນຜົນ ເພື່ອສ້າງແຜນປະຈຳປີ ແມ່ນຈະໄດ້ພິຈາລະນາເອົາເຂົ້າແຜນປີຕໍ່ໆໄປ. ໃນກໍລະນີ ໂຄງການໃດຫາກບໍ່ໄດ້ຮັບການປະເມີນຜົນ ຫຼື ໄດ້ຮັບການປະເມີນຜົນ ແຕ່ຜົນການປະເມີນຢັ້ງຢືນວ່າບໍ່ມີປະສິດທິຜົນ ແລະ ບໍ່ສາມາດເປັນໄປໄດ້ແລ້ວ ແມ່ນບໍ່ອະນຸຍາດໃຫ້ຄະນະກຳມະການແຜນການ ແລະ ການລົງທຶນ, ຂະແໜງການ ແລະ ແຂວງ ອະນຸມັດຈັດເຂົ້າໃນແຜນສົກປີ 2008-2009 ທີ່ຈະນຳສະເໜີຕໍ່ລັດຖະບານ ແລະ ສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງເອົາ.

6.4 ທິດຈຸດສຸມໃນການນຳໃຊ້ທຶນຈາກງົບປະມານຂອງລັດ ໃນສົກປີ 2008-2009 ແມ່ນໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນເອົາໃຈໃສ່ ດັ່ງນີ້: (1) ສົມທົບໂຄງການຊ່ວຍເຫຼືອ ແລະ ກູ້ຢືມຈາກຕ່າງປະເທດ; (2) ໃຊ້ໜີ້ໂຄງການລົງທຶນລັດ ບໍ່ໃຫ້ຫຼຸດ 30% ຂອງທຶນທັງໝົດຂອງຕົນ; ຖ້າກະຊວງ, ອົງການທຽບເທົ່າ ຫຼື ແຂວງໃດ ມີໜີ້ສິນການລົງທຶນລັດໜ້ອຍກວ່າຈຳນວນ 30% ຂອງທຶນທີ່ຕົນໄດ້ຮັບ ຕ້ອງແກ້ໄຂໜີ້ສິນໃຫ້ໝົດໃນສົກງົບປະມານ 2008-2009 ນີ້ເລີຍ; (3) ໂຄງການສືບຕໍ່ ທີ່ເປັນໂຄງການສາມາດນຳໃຊ້ໄດ້ໂດຍໄວ ແລະ ມີປະສິດທິຜົນ; (4) ໂຄງການຫຼຸດຜ່ອນຄວາມທຸກຍາກ ຢູ່ 47 ເມືອງ

ທຸກຍາກທີ່ສຸດ. ໃນການປະຕິບັດຕົວຈິງ, ໃຫ້ຂະແໜງການ ແລະ ທ້ອງຖິ່ນປະຕິບັດຕາມດຳລັດ ເລກທີ 58/ນຍ ຢ່າງເຂັ້ມງວດ; ພ້ອມກັນນັ້ນ, ກໍໃຫ້ກຳນົດລະອຽດ ແລະ ຊັດເຈນ ບັນດາໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອລ້າ ແລະ ທຶນກູ້ຢືມຈາກຕ່າງປະເທດ, ທຶນຈາກອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ (NGOs) ແລະ ທຶນຈາກແຫຼ່ງທຶນອື່ນໆ (ທີ່ກຳລັງຈັດຕັ້ງປະຕິບັດຢູ່ ແລະ ກະກຽມຈັດຕັ້ງປະຕິບັດໃນປີຕໍ່ໄປ) ໂດຍມີ ຫຼື ບໍ່ມີທຶນສົມທົບຂອງລັດຖະບານກໍ່ຕາມ ຕ້ອງໄດ້ສັງລວມເອົາເຂົ້າໃນແຜນການລົງທຶນຂອງລັດທັງໝົດ ເພື່ອໃຫ້ຄະນະກຳມະການແຜນການ ແລະ ການລົງທຶນ ມີບ່ອນອີງໃນການກຳນົດທຶນສົມທົບ, ເພື່ອເຮັດການດຸນດ່ຽງໃນລະດັບມະຫາພາກ ແລະ ເພື່ອຕີລາຄາສະພາບການຈັດຕັ້ງປະຕິບັດວຽກງານຮ່ວມມືເສດຖະກິດກັບຕ່າງປະເທດໄດ້ຢ່າງຊັດເຈນ ແລະ ອີກດ້ານໜຶ່ງ ກໍ່ເພື່ອຫຼີກເວັ້ນບັນຫາການຂຶ້ນແຜນນຳໃຊ້ທຶນສົມທົບຊໍ້າຊ້ອນກັນ ຫຼື ບໍ່ມີພາກສ່ວນໃດຂຶ້ນແຜນເລີຍ.

6.5 ໃນການແບ່ງປັນທຶນ ດັ່ງທີ່ໄດ້ລະບຸໄວ້ໃນຂໍ້ທີ 5.4 ຂ້າງເທິງນີ້, ໃຫ້ຂະແໜງການ ແລະ ທ້ອງຖິ່ນເອົາໃຈໃສ່ ໝົດທຸກບູລິມະສິດຢ່າງສົມສ່ວນ, ບໍ່ຄວນສຸມໃສ່ບູລິມະສິດໃດໜຶ່ງຈົນເກີນໄປ.

6.6 ການຄິດໄລ່ ແລະ ປະເມີນມູນຄ່າໂຄງການລົງທຶນຂອງລັດ ຕ້ອງອີງໃສ່ຫຼັກວິຊາການຢ່າງຄັກແນ່, ມີການຢັ້ງຢືນຈາກໜ່ວຍງານວິຊາການຂອງລັດ; ໃຫ້ຈຳກັດທຸກຮູບການສວຍໂອກາດທີ່ອ້າງໃສ່ການຊຳລະດ້ວຍເງິນໂອນ ເພື່ອເພີ່ມມູນຄ່າໂຄງການເກີນຄວາມເປັນຈິງ; ຫ້າມທຸກຮູບການປະມູນ, ການຈັດຊື້ ແລະ ການຈັດຈ້າງ ທີ່ປະຕິບັດບໍ່ຖືກຕ້ອງຕາມລະບຽບການ.

6.7 ໃຫ້ປະຕິບັດການລົງທຶນຢ່າງມີຈຸດສຸມ ຕາມບູລິມະສິດຂອງລັດຖະບານ ກໍຄືຂອງຂະແໜງການ ແລະ ທ້ອງຖິ່ນ, ຫຼີກລ້ຽງປະກົດການເອົາໂຄງການເຂົ້າແຜນ ໂດຍບໍ່ຄຳນຶງເຖິງຕົວເລກເພດານທຶນທີ່ຕົນໄດ້ຮັບ ເຊິ່ງຈະເປັນສາເຫດພາໃຫ້ເກີດມີໜີ້ສິນຖ້ວມເຄືອໃນຕໍ່ໜ້າ.

6.8 ອຳນາດການປົກຄອງທ້ອງຖິ່ນ ຕ້ອງໄດ້ປຸກລະດົມປະຊາຊົນ ປະກອບສ່ວນດ້ານທຶນຮອນ ຫຼື ແຮງງານ, ວັດສະດຸຂອງທ້ອງຖິ່ນ ເຂົ້າໃສ່ໂຄງການລົງທຶນຂອງລັດຢ່າງເໝາະສົມ, ເຊິ່ງໂຄງການທີ່ມີທຶນສົມທົບຂອງປະຊາຊົນນີ້ ໄດ້ຖືເປັນບູລິມະສິດໜຶ່ງ ສຳລັບການລົງທຶນ.

ມາດຕາ 7. ກ່ຽວກັບການແກ້ໄຂໜີ້ສິນໃນສົກປີ 2007-2008, ໃຫ້ປະຕິບັດດັ່ງນີ້:

7.1 ໃຫ້ຄະນະກຳມະການແກ້ໄຂໜີ້ສິນພາຍໃນຂອງລັດຖະບານ ຂັ້ນສູນກາງ ສືບຕໍ່ເກັບກຳບັນຊີໜີ້ສິນທັງໝົດໃຫ້ສຳເລັດ, ໂດຍແຍກໃຫ້ເຫັນລະອຽດ ອັນໃດແມ່ນໜີ້ໂຄງການລົງທຶນຂອງລັດ, ອັນໃດແມ່ນໜີ້ບໍລິຫານ ຫຼື ໜີ້ອື່ນໆ ເພື່ອຈັດເປັນປະເພດໜີ້ສິນ ແລະ ເປັນບູລິມະສິດໃນການແກ້ໄຂ ແລ້ວນຳສະເໜີຕໍ່ລັດຖະບານເພື່ອພິຈາລະນາຕົກລົງ.

7.2 ໃຫ້ຄະນະກຳມະການແກ້ໄຂໜີ້ສິນພາຍໃນຂອງລັດຖະບານ ຈັດປະຊຸມວິຊາການ ໂດຍເຊີນພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນຂະແໜງການ ແລະ ທ້ອງຖິ່ນທີ່ມີໜີ້ສິນຫຼາຍ ລວມທັງເຈົ້າໜີ້ລາຍໃຫຍ່ມາຮ່ວມ ເພື່ອຊອກຊ່ອງທາງແກ້ໄຂຮ່ວມກັນ ລະຫວ່າງລັດຖະບານ ແລະ ເຈົ້າໜີ້ພາຍໃນ. ສຳລັບໜີ້ທີ່ນອນໃນແຜນ, ໝາຍເຖິງໜີ້ທີ່ເກີດຈາກການປະຕິບັດໜ້າວຽກຂອງໂຄງການເກີນແຜນທີ່ສະພາອະນຸມັດໃນແຕ່ລະສົກປີ, ເຊິ່ງມາເຖິງປະຈຸບັນ ໂຄງການດັ່ງກ່າວໄດ້ຢຸດຕິລົງແລ້ວ ອາດແມ່ນຍ້ອນໂຄງການສຳເລັດ ຫຼື ໂຄງການຖືກໂຈະ ແລະ ໂຄງການດັ່ງກ່າວໄດ້ໝົດໄລຍະປະຕິບັດໂຄງການແລ້ວ, ແມ່ນໃຫ້ຍົກສູງຄວາມຮັບຜິດຊອບໃນການຊຳລະສະສາງ ແລະ ບໍ່ໃຫ້ຍົກຍ້າຍໄປໃສ່ຊ່ວງອື່ນຢ່າງເດັດຂາດ.

7.3 ສຳລັບໜີ້ໂຄງການນອກແຜນ ໝາຍເຖິງໜີ້ທີ່ເກີດຈາກການປະຕິບັດໜ້າວຽກຂອງໂຄງການທີ່ບໍ່ນອນໃນແຜນທີ່ສະພາແຫ່ງຊາດຮັບຮອງ, ໃຫ້ກວດກາ ແລະ ເກັບກຳ ຂຶ້ນບັນຊີໜີ້ສິນນອກແຜນທັງໝົດ, ຈັດປະຊຸມປຶກສາຫາລືເພື່ອຊອກຫາມາດຕະການແກ້ໄຂຕົວຈິງ; ຫລັງຈາກນັ້ນ ຈຶ່ງນຳສະເໜີໃຫ້ລັດຖະບານພິຈາລະນາ ແລະ ຮັບຮອງເອົາກ່ອນ ຈຶ່ງຈັດຕັ້ງປະຕິບັດການຊຳລະສະສາງຕາມການຕົກລົງຕົວຈິງ.

7.4 ສຳລັບໜີ້ທີ່ລັດຖະບານໄດ້ມອບໃຫ້ກະຊວງການເງິນເປັນຜູ້ຕິດຕາມ ແລະ ຮັບຜິດຊອບຊຳລະຜ່ານມານັ້ນ ແມ່ນໃຫ້ສືບຕໍ່ປະຕິບັດຕາມທີ່ໄດ້ຕົກລົງໄວ້ແລ້ວ.

7.5 ໃຫ້ສົມທົບກັບກະຊວງການເງິນ ແລະ ຄະນະກຳມະການແຜນການ ແລະ ການລົງທຶນ ຄົ້ນຄວ້າວິທີການການຊຳລະສະສາງໜີ້ສິນ ດ້ວຍຮູບການທັນໜີ້ເປັນທຶນ, ການນຳໃຊ້ຊັບພະຍາກອນທຳມະຊາດທີ່ເຮົາມີ ແລະ ຮູບການອື່ນໆທີ່ເໝາະສົມ ແນໃສ່ແກ້ໄຂໜີ້ສິນພາຍໃນຂອງລັດຖະບານໃຫ້ຫລຸດລົງເປັນກ້າວໆ.

7.6 ຄຽງຄູ່ກັບການຂຶ້ນແຜນ ແລະ ການຊຳລະສະສາງໜີ້ຕ້ອງຈ່າຍນັ້ນ, ໃຫ້ມີມາດຕະການທີ່ເໝາະສົມ ແລະ ຄ່ອງແຄ້ວ ເພື່ອເລັ່ງທວງການເກັບກູ້ໜີ້ຕ້ອງຮັບຂອງລັດຖະບານໃຫ້ໄດ້ຫລາຍຂຶ້ນ.

6.7 ໃນສົກງົບປະມານປີ 2007-2008, ໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດການຊຳລະໜີ້ໂຄງການລົງທຶນຂອງລັດຢ່າງເຂັ້ມງວດ ຕາມແຜນການທີ່ສະພາແຫ່ງຊາດອະນຸມັດ.

ມາດຕາ 8. ກ່ຽວກັບການຈັດຕັ້ງຜັນຂະຫຍາຍ 11 ແຜນງານໃຫຍ່ຂອງລັດຖະບານ, ໃຫ້ປະຕິບັດດັ່ງນີ້:

8.1 ໃຫ້ຄະນະເລຂາທິການຂອງລັດຖະບານ ສົມທົບກັບຄະນະກຳມະການແຜນການ ແລະ ການລົງທຶນ ຄົ້ນຄວ້າ ແລະ ກຳນົດອົງກອນ (ຄະນະກຳມະການ ຫຼື ກະຊວງ) ທີ່ຈະຮັບຜິດຊອບ ແລະ ຈັດຕັ້ງປະຕິບັດແຕ່ລະແຜນງານໃຫຍ່ຂອງລັດຖະບານໃຫ້ຈະແຈ້ງ. ອົງກອນດັ່ງກ່າວຈະເປັນເຈົ້າການຮັບຜິດຊອບການສ້າງເອກະສານເພື່ອຂໍອະນຸມັດໂຄງການ, ກຳນົດແຜນປະຕິບັດງານ, ແຜນເງິນ, ແຜນຄົນ, ຈັດຕັ້ງປະຕິບັດ ແລະ ສະຫລຸບລາຍງານ ຕໍ່ພາກສ່ວນທີ່ກ່ຽວຂ້ອງຢ່າງເປັນປົກກະຕິ ຕາມລະບຽບຫລັກການທີ່ໄດ້ກຳນົດ.

8.2 ໃຫ້ຄະນະກຳມະການແຜນການ ແລະ ການລົງທຶນ ປະສານສົມທົບກັບກະຊວງການເງິນ ຄົ້ນຄວ້າຈັດສັນແຫຼ່ງທຶນຕາມທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ ເຂົ້າໃສ່ແຕ່ລະໂຄງການຕາມແຜນການ ປະຈຳສົກປີ 2007-2008, ໂດຍສຸມໃສ່ໂຄງການ ຫລື ແຜນງານທີ່ຖືກກຳນົດເປັນບູລິມະສິດ.

8.3 ໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນ ປັບປຸງແຜນພັດທະນາຂອງຕົນ ໃ ຫ້ຕິດພັນກັບ 11 ແຜນງານໃຫຍ່ຂອງລັດຖະບານ, ດຳເນີນການຈັດຕັ້ງປະຕິບັດ ແລະ ລາຍງານໃຫ້ຄະນະກຳມະການແຜນການ ແລະ ການລົງທຶນ ເປັນປົກກະຕິ ເພື່ອສະຫລຸບສັງລວມຜົນຂອງການຈັດຕັ້ງປະຕິບັດ ລາຍງານຕໍ່ລັດຖະບານ ເພື່ອຂໍທິດຊີ້ນຳເປັນແຕ່ລະໄລຍະ.

ມາດຕາ 9. ມອບໃຫ້ຄະນະກຳມະການແຜນການ ແລະ ການລົງທຶນ ປະຕິບັດດັ່ງນີ້:

9.1 ອອກແຈ້ງການແນະນຳ ໄປຍັງຂະແໜງການ ແລະ ທ້ອງຖິ່ນ ກ່ຽວກັບວິທີການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2007-2008 ຕາມທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ ແລະ ແຜນການລົງທຶນຂອງລັດ ຈຳນວນ 2.829 ໂຄງການ ລວມເປັນທຶນ 3.442 ຕື້ກີບ; ໃນນັ້ນ, ທຶນພາຍໃນ 688 ຕື້ກີບ ແລະ ທຶນຕ່າງປະເທດ 2.754 ຕື້ກີບ, ໂດຍໃຫ້ປະຕິບັດຢ່າງເຂັ້ມງວດຕາມດຳລັດ ເລກທີ 58 /ນຍ ວ່າດ້ວຍການຄຸ້ມຄອງການລົງທຶນຂອງລັດ.

9.2 ຈັດຕັ້ງເຜີຍແຜ່, ຊຸກຍູ້, ຕິດຕາມ-ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ- ສັງຄົມຢ່າງເປັນປົກກະຕິ ໂດຍສະເພາະແມ່ນຢູ່ບັນດາທ້ອງຖິ່ນທີ່ມີຄວາມຫຍຸ້ງຍາກໃນດ້ານບຸກຄະລາກອນ. ໃນກໍລະນີຈໍາເປັນ ກໍໃຫ້ຈັດຕັ້ງເອົາພະນັກງານວິຊາການທີ່ມີປະສົບການ ລົງຊ່ວຍນໍາພາຈັດຕັ້ງປະຕິບັດ ແລະ ເຝິກອົບຮົມໃຫ້ພະນັກງານຂອງທ້ອງຖິ່ນ.

9.3 ເປັນເຈົ້າການປະສານສົມທົບ ກັບກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ຕິດຕາມ-ຊຸກຍູ້ການຈັດຕັ້ງປະຕິບັດບັນດາຄາດໝາຍເສດຖະກິດມະຫາພາກ, ຄົ້ນຄວ້າວິທີການ ແລະ ມາດຕະການດັດສົມທີ່ຄົບຊຸດ ແລະ ມີໄຫວພິບ ເພື່ອຮັບປະກັນໃຫ້ບັນລຸຜົນ ຕາມທີ່ໄດ້ກໍານົດໃນມະຕິຕິກລົງຂອງສະພາແຫ່ງຊາດ.

9.4 ດໍາເນີນການຄົ້ນຄວ້າ ແລະ ວິໄຈ ເພື່ອກໍານົດຂອບເສດຖະກິດມະຫາພາກ ແລະ ຂອບການລົງທຶນຂອງລັດ ສໍາລັບສົກປີ 2008-2009 ແລ້ວນໍາສະເໜີຕໍ່ລັດຖະບານໃນງວດ II ຂອງສົກປີ 2007-2008 ເພື່ອກໍານົດເປັນຄາດໝາຍ ແລະ ທິດນໍາ ສໍາລັບການສ້າງແຜນພັດທະນາ ປະຈໍາສົກປີ 2008-2009.

9.5 ຄົ້ນຄວ້າປັບປຸງດໍາລັດ ເລກທີ 58/ນຍ ແລະ 135/ນຍ ຄືນໃໝ່, ໂດຍສະເພາະແມ່ນການປັບປຸງຂັ້ນຕອນ ແລະ ວິທີການສ້າງແຜນການ ແລະ ໂຄງການລົງທຶນຂອງລັດໃຫ້ສອດຄ່ອງກັບກົນໄກການພິຈາລະນາ ແລະ ຮັບຮອງຂອງລັດຖະບານ ແລະ ສະພາແຫ່ງຊາດ ແລ້ວນໍາສະເໜີຕໍ່ລັດຖະບານພິຈາລະນາໃນງວດ I ຂອງສົກປີ 2007-2008. ສໍາລັບດໍາລັດ ເລກທີ 58/ນຍ ແມ່ນໃຫ້ປັບປຸງເຮັດເປັນກົດໝາຍ ເພື່ອນໍາສະເໜີສະພາແຫ່ງຊາດຮັບຮອງ ໃນປີ 2008.

9.6 ເປັນເຈົ້າການປະຕິບັດແຜນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ, ເປັນຕົ້ນແມ່ນຄົ້ນຄ້ວາຈັດສັນໂຄງການລົງທຶນຂອງບັນດາຂະແໜງການ ແລະ ທ້ອງຖິ່ນທີ່ສະເໜີມາ ໃຫ້ປິ່ນອ້ອມ ແລະ ສອດຄ່ອງກັບ 11 ແຜນງານໃຫຍ່ຂອງລັດຖະບານ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010).

9.7 ກະກຽມ ແລະ ເລີ່ມຕົ້ນຂະບວນການປະເມີນຜົນໄລຍະກາງ ຂອງແຜນການ 5 ປີ ຄັ້ງທີ VI (2006-2010) ເພື່ອເປັນພື້ນຖານໃຫ້ແກ່ການສ້າງແຜນການ 5 ປີ ຄັ້ງທີ VII (2011-2015).

9.8 ຮີບຮ້ອນຄົ້ນຄວ້ານໍາໃຊ້ຜົນຂອງການສໍາຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ ຄັ້ງທີ 4 ເພື່ອກໍານົດອັດຕາສ່ວນຂອງຄວາມທຸກຍາກຂອງ ສປປ ລາວ ຢ່າງຊັດເຈນ ແລະ ສະໜອງຂໍ້ມູນໃຫ້ແກ່ຂະບວນການຈັດຕັ້ງປະຕິບັດ ເປົ້າໝາຍສະຫັດສະວັດເພື່ອການພັດທະນາ (MDGs) ເພື່ອເປັນບ່ອນອີງໃຫ້ແກ່ການສ້າງບົດລາຍງານ ກ່ຽວກັບວຽກງານດັ່ງກ່າວໃຫ້ທັນຕາມກໍານົດເວລາ.

9.9 ສືບຕໍ່ປັບປຸງບັນດານະໂຍບາຍສົ່ງເສີມການລົງທຶນຂອງສັງຄົມ ເຂົ້າໃສ່ການພັດທະນາໃຫ້ຫຼາຍຂຶ້ນ, ໂດຍສະເພາະແມ່ນ ປັບປຸງກົນໄກການອະນຸຍາດການລົງທຶນໃຫ້ມີຄວາມກະທັດລັດ, ວ່ອງໄວ ແລະ ໂປ່ງໃສ ໂດຍການຈັດຕັ້ງປະຕິບັດກົນໄກການບໍລິການຜ່ານປະຕູດຽວໃຫ້ມີປະສິດທິຜົນ ແລະ ການທັນເປັນອັນລະອຽດ ດໍາລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄຸ້ມຄອງ ແລະ ສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ; ເປັນເຈົ້າການໃນການປະສານງານ ເພື່ອແກ້ໄຂຢ່າງທັນການ ຖ້າພົບເຫັນກໍລະນີການປະຕິບັດທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ ແລະ ສັນຍາການລົງທຶນ; ຍູ້ແຮງການລະດົມການ

ລົງທຶນຈາກພາກທຸລະກິດຂອງລັດ ແລະ ເອກະຊົນພາຍໃນປະເທດ ແລະ ຕ່າງປະເທດຢ່າງແຂງແຮງ; ສືບຕໍ່ປຶກສາຫາລື ກ່ຽວກັບການມອບສິດໃຫ້ທ້ອງຖິ່ນອະນຸມັດການລົງທຶນໃນຂອບເຂດທົ່ວປະເທດ ເພື່ອນໍາສະເໜີລັດຖະບານພິຈາລະນາ; ສືບຕໍ່ກວດກາຄືນບັນດານະໂຍບາຍສິດທິພິເສດໃນການລົງທຶນ ແລະ ການຈັດຕັ້ງປະຕິບັດໂຄງການລົງທຶນທີ່ໄດ້ອະນຸມັດໄປແລ້ວ ໂດຍເອົາໃຈໃສ່ຕໍ່ບັນຫາທີ່ກ່ຽວພັນກັບລາຄາເຊົ່າທີ່ດິນ, ອາຍຸສໍາປະທານ ແລະ ຄ່າບໍລິການອື່ນໆ ເພື່ອປັບປຸງໃຫ້ສອດຄ່ອງເໝາະສົມ ແລະ ສ້າງຄວາມຈູງໃຈໃໝ່ໃຫ້ແກ່ການລົງທຶນ; ດໍາເນີນການຄົ້ນຄ້ວາ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງເພື່ອປັບປຸງນະໂຍບາຍຕໍ່ກັບແຮງງານຕ່າງປະເທດທີ່ເຮັດວຽກຢູ່ ສປປ ລາວ, ສ້າງກົນໄກທີ່ ແທດເໝາະ ແລະ ມີປະສິດທິພາບ ເພື່ອຄຸ້ມຄອງແຮງງານດັ່ງກ່າວໃຫ້ໄປຕາມທິດ ສ້າງແຮງງານລາວມາປ່ຽນແທນເປັນກ້າວໆ; ວາງແຜນຍຸດທະສາດໃນການດຶງດູດການລົງທຶນໃຫ້ມີຄວາມຊັດເຈນຍິ່ງຂຶ້ນ ເປັນຕົ້ນແມ່ນການສ້າງບັນຊີສົ່ງເສີມການລົງທຶນ ແລະ ໂຄງການຕ່າງໆ ເພື່ອສະເໜີຕໍ່ນັກລົງທຶນ ໂດຍມີການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

9.10 ສືບຕໍ່ຈັດການສໍາມະນາແລກປ່ຽນບົດຮຽນ, ປະສົບການ ແລະ ຄໍາເຫັນ ລະຫວ່າງອົງການມະຫາພາກກັບຜູ້ໃຫ້ທຶນ ແລະ ກັບບັນດາວິສາຫະກິດພາຍໃນ ແລະ ຕ່າງປະເທດ ທັງຢູ່ສູນກາງ ແລະ ທ້ອງຖິ່ນ, ໃນນີ້ ເອົາໃຈໃສ່ປັບປຸງກົນໄກກອງປະຊຸມທຸລະກິດລາວ ຢູ່ຂັ້ນສູນກາງ ແລະ ການພົບປະແລກປ່ຽນ ລະຫວ່າງພາກລັດ ແລະ ພາກທຸລະກິດເອກະຊົນຢູ່ຂັ້ນທ້ອງຖິ່ນ ໃຫ້ມີປະສິດທິພາບສູງ; ເອົາໃຈໃສ່ຕິດຕາມຕີລາຄາສະພາບການດໍາເນີນທຸລະກິດ ຂອງທຸກພາກສ່ວນເສດຖະກິດ ເພື່ອປະຕິບັດນະໂຍບາຍຍ້ອງຍໍແກ່ຫົວໜ່ວຍທີ່ເຄື່ອນໄຫວດີ ແລະ ມີຜົນງານ.

9.11 ເປັນເຈົ້າການສູ້ຊົນສ້າງແຜນຫຼຸດຜ່ອນຄວາມທຸກຍາກຂອງຂັ້ນກຸ່ມບ້ານ ໃຫ້ໄດ້ຕື່ມ 10 ກຸ່ມບ້ານ ຢູ່ເມືອງທຸກຍາກ ເພື່ອເປັນບ່ອນອີງໃຫ້ແກ່ການວາງແຜນພັດທະນາຂອງທ້ອງຖິ່ນ ແລະ ການຍາດແຍ່ງການຊ່ວຍເຫຼືອຈາກສາກົນ.

9.12 ສົມທົບກັບກະຊວງການເງິນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າກົນໄກປະສານງານ ໃນການຄຸ້ມຄອງການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອ ແລະ ກູ້ຢືມຈາກຕ່າງປະເທດ ແນໃສ່ເຮັດໃຫ້ມີຂໍ້ມູນທີ່ຊັດເຈນ, ຄົບຖ້ວນ ເພື່ອປະເມີນ ແລະ ຕີລາຄາ ແລ້ວລາຍງານຕໍ່ລັດຖະບານ.

9.13 ສົມທົບກັບກະຊວງການຕ່າງປະເທດ ຈັດຕັ້ງປະຕິບັດແຜນດໍາເນີນງານຂອງ "ຖະແຫຼງການວຽງຈັນ ວ່າດ້ວຍປະສິດທິຜົນຂອງການຊ່ວຍເຫລືອ" ເພື່ອລະດົມທຶນຈາກຄູ່ຮ່ວມການພັດທະນາ ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VI (2006-2010) ໃຫ້ປະກົດຜົນເປັນຈິງ; ເອົາໃຈໃສ່ປັບປຸງກົນໄກຂະບວນການໂຕະມົນ ແລະ ດໍາເນີນກອງປະຊຸມໂຕະມົນ ເພື່ອປຶກສາຫາລືກັບຄູ່ຮ່ວມການພັດທະນາ ໃນການຈັດຕັ້ງການປະຕິບັດວຽກງານຮ່ວມມືກັບຕ່າງປະເທດ ໃຫ້ມີປະສິດທິຜົນດີ.

9.14 ຄົ້ນຄ້ວາ ສ້າງລະບອບການປະເມີນຜົນໂຄງການລົງທຶນຂອງລັດ ເພື່ອປະເມີນຜົນໂຄງການລົງທຶນ ຕາມການສະເໜີຂອງຂະແໜງການ ແລະ ທ້ອງຖິ່ນ ໂດຍການມີສ່ວນຮ່ວມຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ແນໃສ່ເຮັດໃຫ້ການປະເມີນຜົນໂຄງການເປັນລະບົບລະບຽບຫຼາຍຂຶ້ນ. ການປະເມີນຜົນດັ່ງກ່າວນີ້ ຈະຕ້ອງເລີ່ມເຮັດຕັ້ງແຕ່ຕົ້ນສົກປີ ແລະ ເຮັດຢ່າງເປັນປະຈໍາເປັນແຕ່ລະເດືອນ ຫຼື ງວດຕາມຄວາມ ເໝາະສົມ ເພື່ອຫຼີກລ້ຽງບໍ່ໃຫ້ໂຄງການອັ່ງອໍ ໃນໄລຍະພິຈາລະນາເອົາໂຄງການເຂົ້າແຜນ.

9.15 ເປັນເຈົ້າການສົມທົບກັບຂະແໜງການ ແລະ ທ້ອງຖິ່ນລົງຊຸກຍູ້, ຕິດຕາມ-ກວດກາ, ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2007-08 ຢ່າງເປັນປົກະຕິ ແລະ ສະຫລຸບລາຍງານຕໍ່ລັດຖະບານເປັນແຕ່ລະໄລຍະ.

**ມາດຕາ 10.** ມອບໃຫ້ກະຊວງການເງິນ ປະຕິບັດ ດັ່ງນີ້ :

10.1 ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2007-2008 ໃຫ້ໄດ້ຕາມຄາດໝາຍ, ໂດຍສຸມໃສ່ຂຸດຄົ້ນທຸກແຫຼ່ງລາຍຮັບ ແລະ ເກັບລາຍຮັບລວມສູນເຂົ້າງົບປະມານແຫ່ງລັດ ເພື່ອຮັບປະກັນໃຫ້ແກ່ລາຍຈ່າຍງົບປະມານ ໄປຕາມແຜນລາຍຈ່າຍທີ່ສະພາແຫ່ງຊາດໄດ້ຮັບຮອງ.

10.2 ເອົາໃຈໃສ່ຄຸ້ມຄອງຮ່ວງລາຍຮັບ ທີ່ລັດຖະບານໄດ້ກຳນົດອອກເປັນລະບຽບກົດໝາຍ ໃຫ້ລວມສູນເຂົ້າງົບປະມານແຫ່ງລັດ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ; ໃນນີ້, ໃຫ້ສຸມໃສ່: (1) ກຳນົດປະເພດລາຍຮັບທີ່ເປັນຂອງສູນກາງ ແລະ ຂອງທ້ອງຖິ່ນໃຫ້ມີຄວາມລະອຽດຂຶ້ນຕື່ມ ໂດຍອີງຕາມມາດຕາ 37 ຂອງກົດໝາຍງົບປະມານ ສະບັບປັບປຸງ (ແຫລ່ງລາຍຮັບທີ່ເປັນພູດຂອງສູນກາງ) ແລະ ມາດຕາ 38 (ແຫລ່ງລາຍຮັບພູດຂອງທ້ອງຖິ່ນ), ສ່ວນລາຍຮັບທີ່ເປັນພູດແບ່ງປັນ ລະຫວ່າງສູນກາງ ແລະ ທ້ອງຖິ່ນນັ້ນ (ຕາມມາດຕາ 39) ແມ່ນໃຫ້ສືບຕໍ່ປະຕິບັດຄືກັນກັບປີຜ່ານມາໄປກ່ອນ; (2) ສົມທົບກັບຫຼາຍພາກສ່ວນ, ຫຼາຍຂະແໜງການ, ຫຼາຍຊັ້ນຄົນ, ຫຼາຍແຫຼ່ງຂ່າວ ນັບທັງຢູ່ຊັ້ນສູນກາງ ແລະ ຊັ້ນທ້ອງຖິ່ນ ເພື່ອຊອກຮູ້ການລະເມີດລະບຽບການ ແລະ ການເຊື່ອງອຳລາຍຮັບຂອງບັນດາຫົວໜ່ວຍທຸລະກິດທີ່ມີຈຸດປະສົງຫຼີກລ້ຽງພັນທະຕໍ່ງົບປະມານ, ລາຍຮັບວິຊາການຂອງບັນດາຂະແໜງການ, ການລະເມີດລະບຽບການນຳເຂົ້າສິນຄ້າແບບບໍ່ຖືກຕ້ອງ; (3) ປັບປຸງຂອດບໍລິການເກັບລາຍຮັບຂອງຂະແໜງລາຍຮັບໃຫ້ກະທັດລັດເບົາບາງ, ວ່ອງໄວ ແລະ ຈະແຈ້ງ, ແຕ່ຕ້ອງຮັບປະກັນຄວາມຖືກຕ້ອງ, ຊັດເຈນ ແລະ ໂປ່ງໃສ ເພື່ອເຮັດໃຫ້ຜູ້ໄດ້ຮັບການບໍລິການມີຄວາມພໍໃຈໃນລະດັບດີ; (4) ເອົາໃຈໃສ່ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ (ແຂວງ, ເມືອງ, ບ້ານ) ປັບປຸງຂອດບໍລິການເກັບພາສີທີ່ດິນໃຫ້ມີກົນໄກທີ່ຈະແຈ້ງ ແລະ ສ້າງຂໍ້ມູນສະຖິຕິ ເພື່ອເປັນພື້ນຖານໃຫ້ແກ່ການຂະຫຍາຍຕົວທາງດ້ານລາຍຮັບພາສີທີ່ດິນ; ການເກັບພາສີທີ່ດິນ ຕ້ອງໃຫ້ສອດຄ່ອງກັບລັດຖະບັນຍັດຂອງປະທານປະເທດເລກທີ 01/ສປປ; (5) ເອົາໃຈໃສ່ເກັບກຳຂໍ້ມູນ, ສ້າງຖານຂໍ້ມູນແຫຼ່ງລາຍຮັບງົບປະມານແຫ່ງລັດ ແລະ ສ້າງກົນໄກຄຸ້ມຄອງໃຫ້ເປັນລະບົບທັນສະໄໝ; (6) ຈັດຕັ້ງປະຕິບັດລັດຖະບັນຍັດ ເລກທີ 02 ຂອງປະທານປະເທດ, ດຳລັດວ່າດ້ວຍໃບເກັບເງິນຂອງນາຍົກລັດຖະມົນຕີ ເລກທີ 12/ນຍ ໃຫ້ຖືກຕ້ອງຄົບຖ້ວນ; ໃຫ້ສືບຕໍ່ລົງເກັບກຳຂໍ້ມູນສະພາບລາຍຮັບຄ່າບໍລິການນ້ຳຊົມລະປະທານ ໃນທົ່ວປະເທດ.

10.3 ເອົາໃຈໃສ່ຄຸ້ມຄອງ ແລະນຳພາການຈັດຕັ້ງປະຕິບັດທຸກຮ່ວງລາຍຈ່າຍທີ່ສະພາແຫ່ງຊາດໄດ້ຮັບຮອງ ໃຫ້ຖືກຕ້ອງຕາມແຜນວຽກ, ແຜນງານ, ໂຄງການ, ແຜນຄົນ, ແຜນເງິນ ພ້ອມທັງຈັດແຜນລາຍຈ່າຍງົບປະມານ ສົກປີ 2007-2008 ເຂົ້າໃນແຜນວຽກດັ່ງກ່າວ ໂດຍສຸມໃສ່: (1) ຮັບປະກັນລາຍຈ່າຍອັນຈຳເປັນຕ່ຳສຸດຂອງຊີວິດການເປັນຢູ່ຂອງພະນັກງານ, ລັດຖະກອນ, ທະຫານ, ຕຳຫລວດ ໂດຍເພີ່ມເງິນເດືອນຈາກ 2.000 ກີບ/ໜຶ່ງດັດສະນີ ມາເປັນ 2.500 ກີບ/ໜຶ່ງດັດສະນີ ຕາມທີ່ສະພາແຫ່ງຊາດໄດ້ຮັບຮອງ; ໃຫ້ຮັບຜິດຊອບຈັດຕັ້ງປະຕິບັດການເພີ່ມເງິນເດືອນດັ່ງກ່າວ ນັບແຕ່ວັນທີ 1 ຕຸລາ 2007 ຢ່າງເປັນເອກະພາບໃນທົ່ວປະເທດ; (2) ສູ້ຊົນຈັດຕັ້ງປະຕິບັດລາຍຈ່າຍງົບປະມານໃຫ້ໄປຕາມແຜນພັດທະນາ

ເສດຖະກິດ-ສັງຄົມທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ ເພື່ອຮັບປະກັນການກະຕຸ້ນເສດຖະກິດ ແລະ ການຜະລິດສິນຄ້າໃຫ້ມີຖ່ວງທ່າດີຂຶ້ນ; (3) ເອົາໃຈໃສ່ຈັດສັນ ແລະ ຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດໃຫ້ເໝາະສົມ ຕາມແຜນການທີ່ວາງໄວ້; ໃນນີ້, ໃຫ້ເອົາໃຈໃສ່ຕື່ມ ການແກ້ໄຂໜີ້ສິນພາຍໃນປະເທດ; (4) ເອົາໃຈໃສ່ລາຍຈ່າຍເພື່ອສົ່ງເສີມການເກັບລາຍຮັບງົບປະມານ ໂດຍປະຕິບັດຕາມມາດຕາ 45 ຂອງກົດໝາຍງົບປະມານ ສະບັບປັບປຸງ.

10.4 ເອົາໃຈໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍໃຫ້ເຄັ່ງຄັດ, ພ້ອມກັນນັ້ນ ກໍໃຫ້ສືບຕໍ່ຄົ້ນຄ້ວາປັບປຸງບາງລະບຽບກົດໝາຍທີ່ຍັງເຫັນວ່າມີຄວາມຈຳເປັນ, ບາງລະບຽບກົດໝາຍທີ່ມີແລ້ວ ແຕ່ບໍ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການໃນປະຈຸບັນ, ສະເພາະໜ້າ ແລະ ຍາວນານ ແລ້ວນຳສະເໜີຕໍ່ລັດຖະບານ ແລະ ສະພາແຫ່ງຊາດ.

10.5 ສົມທົບກັບຄະນະກຳມະການແຜນການ ແລະ ການລົງທຶນ ຄົ້ນຄ້ວາບົດແນະນຳການສ້າງແຜນງົບປະມານແຫ່ງລັດ ສົກປີ 2008-2009, ພ້ອມທັງກຳນົດທິດທາງ ແລະ ຂອບເຂດທຶນງົບປະມານແຫ່ງລັດໃຫ້ໄປຕາມແຜນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ່ VIII ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ (2006-2010).

10.6 ໃນໄລຍະຕົ້ນສົກປີ ທີ່ລາຍຮັບງົບປະມານບໍ່ທັນຮັບປະກັນໃຫ້ແກ່ການປະຕິບັດລາຍຈ່າຍໄດ້ນັ້ນ, ໃຫ້ກະຊວງການເງິນມີສິດນຳໃຊ້ເງິນລ່ວງໜ້າຈາກທະນາຄານແຫ່ງ ສປປ ລາວ ໂດຍບໍ່ມີດອກເບ້ຍ ໃນວົງເງິນບໍ່ເກີນແຜນລາຍຈ່າຍ ງວດທີ I ເພື່ອຮັບປະກັນລາຍຈ່າຍວຽກບໍລິຫານລັດ, ແຕ່ຕ້ອງມີກົນໄກຊຳລະສະສາງຄືນໃຫ້ທະນາຄານຢ່າງເປັນລະບົບ ເພື່ອຮັບປະກັນໃຫ້ແກ່ການຄຸ້ມຄອງສະເຖຍລະພາບ ດ້ານການເງິນແຫ່ງຊາດ.

10.7 ສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ຊອກຫາແຫຼ່ງທຶນກູ້ຢືມ ແລະ ທຶນຊ່ວຍເຫລືອລ້າຈາກຕ່າງປະເທດ ທີ່ບໍ່ມີເງື່ອນໄຂຜູກມັດຫຼາຍ, ດອກເບັ້ຍຕ່ຳ, ໄລຍະກູ້ຢືມຍາວ ເພື່ອນຳໃຊ້ໃນການປະຕິບັດໂຄງການພັດທະນາທີ່ເປັນບຸລິມະສິດຂອງລັດຖະບານ.

10.8 ເອົາໃຈໃສ່ປັບປຸງວຽກງານຮອບດ້ານພາຍໃນກະຊວງ ໃຫ້ມີຄວາມໜັກແໜ້ນ, ເປັນຕົ້ນແມ່ນຕັ້ງໜ້າຄົ້ນຄວ້າປັບປຸງສາມຂະແໜງການສາຍຕັ້ງ (ພາສີ, ສ່ວຍສາອາກອນ ແລະ ຄັງເງິນ) ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ແລະ ແກ້ໄຂບັນຫາປະກົດການຫຍໍ້ທໍ້ຕ່າງໆໃນຂະແໜງການເງິນ; ສືບຕໍ່ປັບປຸງການຈັດຕັ້ງ, ຄົ້ນຄວ້າກົນໄກການປະສານງານພາຍໃນໃຫ້ຄ່ອງຕົວດີຂຶ້ນ ເພື່ອຮັບປະກັນໃຫ້ສາມາດເຮັດຫລ້ອນໜ້າທີ່ທີ່ລັດຖະບານມອບໝາຍໃຫ້.

10.9 ອອກບົດແນະນຳຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2007-2008 ໃຫ້ຈະແຈ້ງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ໂດຍເລີ່ມຈາກການຄຸ້ມຄອງງົບປະມານມະຫາພາກ ແລະ ກ້າວໄປຫາການຄຸ້ມຄອງງົບປະມານຈຸນລະພາກ; ຮັບປະກັນບໍ່ໃຫ້ລາຍຮັບຮົ່ວໄຫລ ແລະ ລາຍຈ່າຍບໍ່ໃຫ້ເກີນແຜນ ຫຼື ມີການຈ່າຍນອກແຜນ.

**ມາດຕາ 11.** ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້ :

11.1 ເປັນເຈົ້າການຄົ້ນຄວ້າເພື່ອວາງນະໂຍບາຍເງິນຕາ ໃຫ້ສົມຄູ່ກັບການຂະຫຍາຍຕົວຂອງເສດຖະກິດ, ຄຸ້ມຄອງອັດຕາແລກປ່ຽນໃຫ້ມີຄວາມສະຖຽນໝັ້ນທ່ຽງ, ກຳນົດນະໂຍບາຍອັດຕາດອກເບ້ຍໃຫ້ [illegible] ເໝາະ ແລະ ຊຸກຍູ້ສົ່ງເສີມການຜະລິດ-ທຸລະກິດຢ່າງແຂງແຮງ; ວາງ ແລະ [illegible]

ຊຸກຍູ້ສົ່ງເສີມການນຳໃຊ້ເງິນກີບ ໃນການຊຳລະສະສາງພາຍໃນໃຫ້ຫຼາຍຂຶ້ນ; ອອກລະບຽບການ ກ່ຽວກັບການຊຳລະເງິນຕາຕ່າງປະເທດຜ່ານລະບົບທະນາຄານ ແລະ ຄຸ້ມຄອງກະແສການໄຫຼເຂົ້າ-ອອກຂອງເງິນຕາຕ່າງປະເທດ ຕາມລະບຽບການວາງໄວ້.

11.2 ເອົາໃຈໃສ່ສ້າງເງື່ອນໄຂໃຫ້ຄັງສຳຮອງເງິນຕາຕ່າງປະເທດທາງການເພີ່ມຂຶ້ນ; ຄຸ້ມຄອງ ແລະ ປັບປຸງທະນາຄານທຸລະກິດລັດ ໃຫ້ມີຄວາມສາມາດໃນການບໍລິການຢ່າງມີປະສິດທິພາບ ແລະ ໄດ້ມາດຕະຖານສາກົນເທື່ອລະກ້າວ ເພື່ອສ້າງຄວາມເຊື່ອຖືແກ່ລູກຄ້າ; ເພີ່ມທະວີເອົາໃຈໃສ່ການແກ້ໄຂບັນຫາໜີ້ສິນຄ້າງຄາ ແລະ ໜີ້ບໍ່ເກີດດອກອອກຜົນ ໂດຍໃຫ້ມີມາດຕະການປະຕິບັດທີ່ຊັດເຈນ ແລະ ມີປະສິດທິພາບ; ອຳນວຍຄວາມສະດວກເງິນລ່ວງໜ້າໃຫ້ງົບປະມານ ຕາມມາດຕາ 10 ຂໍ້ 10.6 ຂອງດຳລັດສະບັບນີ້ ໃຫ້ທັນກັບສະພາບຄວາມຕ້ອງການຕົວຈິງ.

11.3 ສືບຕໍ່ຄົ້ນຄວ້າໂຄງການສ້າງຄວາມເຂັ້ມແຂງ ແລະ ພັດທະນາລະບົບສະຖາບັນການເງິນຢູ່ ສປປ ລາວ ເພື່ອກະຕຸ້ນການພັດທະນາເສດຖະກິດ, ສ້າງຄວາມເຊື່ອຖືຕໍ່ລູກຄ້າທັງພາຍໃນ ແລະ ຕ່າງປະເທດ; ຕັ້ງໜ້າຄົ້ນຄວ້າກ່ຽວກັບຕະຫຼາດທຶນ ເພື່ອກະກຽມເງື່ອນໄຂ ກ້າວໄປສູ່ການພັດທະນາຕະຫລາດເງິນທຶນໃນຕໍ່ໜ້າ.

11.4 ສືບຕໍ່ປັບປຸງກົງຈັກຂອງທະນາຄານນະໂຍບາຍ ຢູ່ແຕ່ລະຂັ້ນໃຫ້ສຳເລັດ ແລະ ໃຫ້ສາມາດເຄື່ອນໄຫວໄດ້ຢ່າງມີປະສິດທິຜົນ ເພື່ອສ້າງທ່າແຮງໃໝ່ໃຫ້ປະຊາຊົນຜູ້ທຸກຍາກໄດ້ເຂົ້າເຖິງແຫຼ່ງທຶນເພື່ອນຳໃຊ້ໃນການຜະລິດ ແນໃສ່ພັດທະນາຕົນເອງ ກໍຄື ພັດທະນາຊຸມຊົນຂອງຕົນ.

**ມາດຕາ 12.** ມອບໃຫ້ຄະນະຊີ້ນຳພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກແຫ່ງຊາດ ປະຕິບັດດັ່ງນີ້:

12.1 ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ເປີດກອງປະຊຸມສະຫຼຸບຖອດຖອນບົດຮຽນວຽກງານລຶບລ້າງຄວາມທຸກຍາກໃນຂອບເຂດທົ່ວປະເທດ ແລ້ວລາຍງານຕໍ່ລັດຖະບານ.

12.2 ສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ເພື່ອໂຄສະນາເຜີຍແຜ່ນະໂຍບາຍການພັດທະນາຊົນນະບົດ ແລະ ການລຶບລ້າງຄວາມທຸກຍາກຂອງລັດຖະບານ ຢ່າງກວ້າງຂວາງ ເພື່ອເຮັດໃຫ້ທົ່ວສັງຄົມ, ອົງການຈັດຕັ້ງຂອງລັດທຸກຂັ້ນ ກໍຄືສາກົນ ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງຖືກຕ້ອງ ແລະ ເປັນເອກະພາບ; ສ້າງຈິດສຳນຶກໃຫ້ທົ່ວສັງຄົມມີສ່ວນຮ່ວມ ໃນວຽກງານລຶບລ້າງຄວາມທຸກຍາກ ເພື່ອສ້າງກຳລັງແຮງສັງລວມທົ່ວສັງຄົມ ສົມທົບກັບ ການຍາດແຍ່ງການຊ່ວຍເຫຼືອຈາກບັນດາປະເທດເພື່ອນມິດ ແລະ ສາກົນເຂົ້າໃສ່ວຽກງານດັ່ງກ່າວ, ໂດຍສະເພາະແມ່ນບັນດາໂຄງການເພື່ອຫຼຸດຜ່ອນຄວາມທຸກຍາກຢູ່ 47 ເມືອງທຸກຍາກກວ່າໝູ່ໃນປະເທດ.

12.3 ປະສານກັບຂະແໜງການ ແລະ ທ້ອງຖິ່ນ ຕິດຕາມການຈັດຕັ້ງປະຕິບັດບັນດາແຜນງານ ແລະ ໂຄງການຈຸດສຸມເພື່ອພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂອງບັນດາຂະແໜງການ ແລະ ທ້ອງຖິ່ນ ເພື່ອສັງລວມບັນຫາທັງດ້ານດີ ແລະ ດ້ານອ່ອນ ນຳສະເໜີຕໍ່ລັດຖະບານເພື່ອຜັນຂະຫຍາຍ ແລະ ແກ້ໄຂ.

12.4 ຄົ້ນຄ້ວາ ແລະ ປັບປຸງກົນໄກການປະສານງານ ລະຫວ່າງຂະແໜງການຂັ້ນສູນກາງດ້ວຍກັນ ແລະ ລະຫວ່າງສູນກາງ ກັບທ້ອງຖິ່ນ; ຊຸກຍູ້ຂະແໜງການ ແລະ ທ້ອງຖິ່ນປະຕິບັດລະບອບການລາຍງານວຽກງານດັ່ງກ່າວຢ່າງປົກກະຕິ, ຍົກສູງການແລກປ່ຽນຂໍ້ມູນຂ່າວສານ ເຮັດໃຫ້ວຽກງານພັດທະນາຊົນນະບົດ

ແລະ ລຶບລ້າງຄວາມທຸກຍາກ ມີຂໍ້ມູນທີ່ອຸດົມສົມບູນ ແລະ ເຊື່ອຖືໄດ້ ເພື່ອນໍາໃຊ້ໃນການສ້າງແຜນການ, ແຜນງານ ແລະ ໂຄງການ ໃນແຕ່ລະໄລຍະ.

**ມາດຕາ 13.** ມອບໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ປະຕິບັດດັ່ງນີ້ :

13.1 ຄົ້ນຄວ້າ ວາງນະໂຍບາຍ ແລະ ມາດຕະການຕ່າງໆ ເພື່ອຄຸ້ມຄອງ, ດັດສົມ ແລະ ແຊກແຊງລາຄາສິນຄ້າໃນເວລາມີຄວາມຈໍາເປັນ; ກໍານົດລະບຽບການແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງການນໍາເຂົ້າສິນຄ້າຍຸດທະສາດໃຫ້ບັນດາແຂວງ; ປັບປຸງ ແລະ ສ້າງກົນໄກທີ່ສອດຄ່ອງ ເພື່ອຊຸກຍູ້ສົ່ງເສີມການຜະລິດສິນຄ້າທົດແທນການນໍາເຂົ້າ ແລະ ເປັນຂາອອກ; ເປັນເຈົ້າການຊອກຫາຕະຫຼາດສົ່ງອອກສິນຄ້າໃຫ້ກວ້າງຂວາງ, ເພີ່ມການຈັດງານວາງສະແດງສິນຄ້າ, ຕະຫຼາດນັດຂອງປະຊາຊົນ, ການສົ່ງເສີມການຄ້າຊາຍແດນ ແລະ ການຄ້າຜ່ານແດນໃຫ້ແຂງແຮງກວ່າເກົ່າ; ເອົາໃຈໃສ່ຄຸ້ມຄອງຮ້ານຄ້າປອດພາສີໃຫ້ເຄື່ອນໄຫວຢ່າງຖືກຕ້ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ.

13.2 ສືບຕໍ່ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້ານະໂຍບາຍ, ກົດໝາຍ, ລະບຽບການຕ່າງໆ ເພື່ອພັດທະນາ ແລະ ຄຸ້ມຄອງເຂດເສດຖະກິດພິເສດ, ເຂດອຸດສາຫະກໍາ, ເຂດການຄ້າເສລີ ແລະ ການບໍລິການຜ່ານ ທີ່ລັດຖະບານໄດ້ຕົກລົງແລ້ວໃຫ້ສໍາເລັດໂດຍໄວ ແນໃສ່ສົ່ງເສີມການຜະລິດສິນຄ້າ ແລະ ການບໍລິການໃຫ້ຫລາກຫລາຍ, ມີຈໍານວນ ແລະ ຄຸນນະພາບເພີ້ມຂຶ້ນ.

13.3 ສ້າງເງື່ອນໄຂ ເພື່ອຊຸກຍູ້ການປະຕິບັດຍຸດທະສາດຫັນເປັນອຸດສາຫະກໍາ ແລະ ເປັນທັນສະໄໝໃຫ້ເປັນຮູບປະທໍາເທື່ອລະກ້າວ; ສືບຕໍ່ຄົ້ນຄວ້າສ້າງໂຄງການບູລິມະສິດຜະລິດສິນຄ້າ ຫຼື ການບໍລິການ ທີ່ເປັນປາຍແຫຼມ.

13.4 ເອົາໃຈໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ດໍາລັດ ເລກທີ 42/ນຍ ວ່າດ້ວຍການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ ສປປ ລາວ ເພື່ອຊຸກຍູ້ການຜະລິດໃຫ້ກວ້າງຂວາງ, ສາມາດຕອບສະໜອງໃຫ້ແກ່ຕະຫຼາດພາຍໃນ ແລະ ເພື່ອສົ່ງອອກ, ສ້າງວຽກເຮັດງານທໍາໃຫ້ແກ່ແຮງງານໃຫ້ໄດ້ຫລາຍຂຶ້ນ ໂດຍສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດເຂົ້າຮ່ວມຢ່າງຕັ້ງໜ້າ.

**ມາດຕາ 14.** ໃຫ້ກະຊວງກະສິກໍາ-ປ່າໄມ້ ແລະ ກະຊວງອຸດສາຫະກໍາ-ການຄ້າ ປະສານງານກັນ ເພື່ອປະຕິບັດກົນໄກຄວບຄຸມ ແລະ ເຂັ້ມງວດຕໍ່ການປະຕິບັດຄໍາສັ່ງຂອງນາຍົກລັດຖະມົນຕີ ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ປະຈໍາສົກປີ 2007-2008 (ສະບັບເລກທີ 30.../ນຍ, ລົງວັນທີ17/8/2007), ໂດຍສະເພາະແມ່ນ ເອົາໃຈໃສ່ສົ່ງເສີມອຸດສາຫະກໍາປຸງແຕ່ງໄມ້ເປັນຜະລິດຕະພັນສໍາເລັດຮູບ ໃຫ້ມີຄຸນນະພາບໄດ້ມາດຕະຖານ, ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງກວດກາ-ຕີລາຄາ ແລະ ປະເມີນບໍລິມາດໄມ້ ໃນຂອບເຂດທີ່ອະນຸຍາດໃຫ້ຂຸດຄົ້ນ ແລະ ເກັບກູ້ໄມ້ຕາມໂຄງການກໍ່ສ້າງເຂື່ອນໄຟຟ້າ ແລະ ແລວທາງ ທີ່ໄດ້ຮັບການອະນຸມັດ; ຮີບຮ້ອນປັບປຸງລະບົບນະໂຍບາຍ ແລະ ການຈັດຕັ້ງ ເພື່ອຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນແຫ່ງຊາດໃຫ້ມີປະສິດທິພາບ, ຢຸດຕິການອອກອະນຸຍາດເກັບກູ້ໄມ້ນອນຂອນຕາຍຢ່າງສິ້ນເຊີງ.

**ມາດຕາ 15.** ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນເຈົ້າການໃນການກວດກາຄືນ ບັນດາກິດຈະກໍາການສໍາຫຼວດ ແລະ ຂຸດຄົ້ນບໍ່ແຮ່ ທີ່ໄດ້ອະນຸຍາດໄປແລ້ວນັ້ນ, ຄົ້ນຄ້ວາ ແລະ ປັບປຸງນະໂຍບາຍກ່ຽວກັບການໃຫ້ສໍາປະທານການສໍາຫຼວດ ແລະ ຂຸດຄົ້ນບໍ່ແຮ່ ແລ້ວກໍານົດເຂດແດນໃຫ້ຈະແຈ້ງ; ສືບຕໍ່ຕິດຕາມການ

ປະຕິບັດໂຄງການນ້ຳເທີນ 2, ໂຄງການນ້ຳງື່ມ 2 ແລະ 3, ໂຄງການເຊຂະໜານ 3 ແລະ ໂຄງການເຂື່ອນໄຟຟ້າອື່ນໆໃຫ້ດຳເນີນໄປຕາມແຜນການ; ເອົາໃຈໃສ່ຊຸກຍູ້ໂຄງການທີ່ຍັງບໍ່ທັນໄດ້ຕົກລົງກັນໃຫ້ສຳເລັດໂດຍໄວເພື່ອໃຫ້ສາມາດດຳເນີນການໄດ້; ເອົາໃຈໃສ່ຕິດຕາມຊຸກຍູ້ການປະຕິບັດລະບຽບການຄຸ້ມຄອງການຂຸດຄົ້ນແຮ່ຄຳ, ແຮ່ທອງແດງ ແລະ ແຮ່ອື່ນໆຢ່າງເຄັ່ງຄັດ ບົນພື້ນຖານກົດໝາຍບໍ່ແຮ່ ແລະ ສັນຍາທີ່ໄດ້ເຊັນກັນ.

**ມາດຕາ 16.** ໃຫ້ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ສືບຕໍ່ຄົ້ນຄວ້າຮ່າງດຳລັດ ກ່ຽວກັບກຳນົດໝາຍມາດຖານລາຄາຫົວໜ່ວຍການກໍ່ສ້າງ ແລະ ສ້ອມແປງຕ່າງໆ ໃຫ້ສຳເລັດໂດຍໄວ ເພື່ອເປັນບ່ອນອີງໃຫ້ແກ່ການກຳນົດລາຄາກາງໃນການປະກວດລາຄາເພື່ອວ່າຈ້າງ ກໍຄືການວາງແຜນ, ຄຸ້ມຄອງ, ກວດກາ ແລະ ປະເມີນຜົນໂຄງການ ແລະ ກິດຈະການລົງທຶນຕ່າງໆຢ່າງເປັນລະບົບ; ພ້ອມດຽວກັນນັ້ນ, ກໍ່ສົມທົບກັບກະຊວງ, ອົງການຕ່າງໆ ອອກລະບຽບການທີ່ໃຫ້ບູລິມະສິດແກ່ບໍລິສັດພາຍໃນຂອງ ລາວ ລວມທັງການນຳໃຊ້ວັດສະດຸກໍ່ສ້າງພາຍໃນເປັນຕົ້ນຕໍ ແລະ ການນຳໃຊ້ແຮງງານພາຍໃນ; ເອົາໃຈໃສ່ປົກປັກຮັກສາທາງຫຼວງແຫ່ງຊາດ ເພື່ອປະຫຍັດລາຍຈ່າຍໃນການສ້ອມແປງ ແລະ ເຮັດໃຫ້ອາຍຸການໃຊ້ງານໄດ້ຍາວນານ ດ້ວຍການເອົາໃຈໃສ່ໃນການຊັ່ງນ້ຳໜັກລົດບັນທຸກຢ່າງເຂັ້ມງວດ; ສົມທົບກັບກະຊວງການເງິນຄົ້ນຄວ້າຍຸດທະສາດການບໍລິການທາງຜ່ານ ໃຫ້ສາມາດຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໄດ້ຢ່າງເປັນຮູບປະທຳ.

**ມາດຕາ 17.** ໃຫ້ກະຊວງສຶກສາທິການປະສານສົມທົບ ກັບກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຄົ້ນຄວ້າສ້າງແຜນແມ່ບົດ ແລະ ໂຄງການພັດທະນາຊັບພະຍາກອນມະນຸດ; ໃຫ້ກະຊວງສຶກສາທິການເປັນເຈົ້າການຄົ້ນຄ້ວາ ແລະ ຈັດຕັ້ງປະຕິບັດການປະຕິຮູບລະບົບການສຶກສາແຫ່ງຊາດ ເພື່ອຍົກລະດັບຄຸນນະພາບຂອງການສຶກສາ; ປັບປຸງນະໂຍບາຍການສຶກສາພາກເອກກະຊົນ ເພື່ອຂະຫຍາຍໂຮງຮຽນຊັ້ນຕ່າງໆ ໃນແຕ່ລະທ້ອງຖິ່ນ, ເປັນຕົ້ນແມ່ນໂຮງຮຽນສາມັນ, ໂຮງຮຽນວິຊາຊີບ, ວິທະຍາໄລ ແລະ ອື່ນໆ; ຄົ້ນຄວ້າເພື່ອປະຕິບັດນະໂຍບາຍເງິນເດືອນຕໍ່ຄູອາຈານ ໂດຍສະເພາະຜູ້ທີ່ໄປເຮັດວຽກຢູ່ບ່ອນທຸລະກັນດານ ແລະ ຫ່າງໄກສອກຫຼີກ.

**ມາດຕາ 18.** ໃຫ້ກະຊວງສາທາລະນະສຸກ ເອົາໃຈໃສ່ການຄຸ້ມຄອງວິໃຈ, ກວດກາອາຫານ ແລະ ຢາ ເພື່ອປົກປ້ອງສຸຂະພາບຂອງຜູ້ບໍລິໂພກໃຫ້ໄດ້ດີ; ຫັນເອົາວຽກງານສາທາລະນະສຸກລົງສູ່ຮາກຖານຫຼາຍຂຶ້ນ, ເຊິ່ງເລີ່ມຈາກການຫັນເອົາພະນັກງານລົງໄປປະຈຳຢູ່ໂຮງໝໍພາກ, ໂຮງຮຽນ, ສະຖາບັນ, ສູນ, ໂຄງການ, ແຂວງ, ເມືອງ, ສຸກສາລາ ແລະ ກຸ່ມບ້ານຕ່າງໆ ເພື່ອໃຫ້ການບໍລິການປິ່ນປົວ ແລະ ຮັກສາສຸຂະພາບແກ່ປະຊາຊົນ ແລະ ແກ້ໄຂສະພາບການລະບາດຂອງພະຍາດຕ່າງໆ ລວມທັງພະຍາດໄຂ້ຫວັດສັດປີກ; ສືບຕໍ່ປະຕິບັດການປິ່ນປົວປະເພດເສັຍຄ່າ ແລະ ບໍ່ເສັຍຄ່າໃຫ້ສອດຄ່ອງກັບສະພາບຕົວຈິງ; ເອົາໃຈໃສ່ຕິດຕາມຄຸ້ມຄອງ ແລະ ຊຸກຍູ້ສົ່ງເສີມພາກເອກະຊົນ ໃຫ້ມີບົດບາດປະກອບສ່ວນໃນວຽກງານປິ່ນປົວ ແລະ ຮັກສາສຸຂະພາບຂອງປະຊາຊົນ.

**ມາດຕາ 19.** ມອບໃຫ້ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຄົ້ນຄວ້າສ້າງໂຄງການເພື່ອປັບປຸງລະບົບສື່ມວນຊົນໃຫ້ມີຄຸນນະພາບ, ວ່ອງໄວທັນການ, ເປັນສື່ໃນການໃຫ້ຄວາມຮູ້ຄວາມເຂົ້າໃຈ ທັງມີລັກສະນະສຶກສາອົບຮົມ ໄປຕາມແນວທາງນະໂຍບາຍຂອງພັກ, ໃຫ້ຄວາມຮູ້ ແລະສາລະຫລາຍດ້ານ ເຊັ່ນ: ດ້ານລະບຽບກົດໝາຍ, ວິທະຍາສາດ ແລະ ວິຊາການຕ່າງໆ, ເອົາໃຈໃສ່ໂຄສະນາຕົວແບບ, ວຽກດີຄົນເດັ່ນ; ສົ່ງເສີມສິລະປະວັດທະນະທຳທີ່ມີມູນເຊື້ອອັນດີງາມຂອງຊາດ; ເອົາໃຈໃສ່ໂຄສະນາສົ່ງເສີມການຜະລິດສິນຄ້າໃຫ້ເປັນຂະບວນກວ້າງຂວາງ, ດຶງດູດການລົງທຶນພາຍໃນ ແລະ ຕ່າງປະເທດ ເພື່ອລົງທຶນໃນຂະແໜງສົ່ງເສີມ ແລະ ໂຄສະນາໃຫ້ນັກທ່ອງທ່ຽວເຂົ້າມາທ່ອງທ່ຽວໃນປະເທດຫຼາຍຂຶ້ນ.

**ມາດຕາ 20.** ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເອົາໃຈໃສ່ຈັດຕັ້ງເຜີຍແຜ່ກົດໝາຍ ວ່າດ້ວຍການປະກັນສັງຄົມຢ່າງກ້ວາງຂວາງ; ຄົ້ນຄວ້າສ້າງແຜນການ ແລະ ໂຄງການພັດທະນາສີມືແຮງງານ ໃຫ້ມີຄຸນນະພາບ, ຮັບປະກັນຖັນແຖວພະນັກງານ, ກຳມະກອນເຕັກນິກ ທີ່ພົວພັນກັບການລົງທຶນຕ່າງປະເທດໃຫ້ພຽງພໍທາງດ້ານຈຳນວນ ແລະ ຄຸນນະພາບຢ່າງເປັນກ້າວໆ; ຄົ້ນຄວ້າ ແລະ ປະກາດໃຊ້ລະບຽບການຄຸ້ມຄອງແຮງງານຕ່າງດ້າວທີ່ເຮັດວຽກໃນ ສປປ ລາວ ໃຫ້ຮັດກຸມ ແລະ ເຂັ້ມງວດ; ສືບຕໍ່ແກ້ໄຂບັນຫາຄົນລາວທີ່ອອກໄປເຮັດວຽກຢູ່ຕ່າງປະເທດໃຫ້ຖືກຕ້ອງ; ເອົາໃຈໃສ່ຄົ້ນຄວ້າປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານຕໍ່ການປະຕິວັດ, ຜູ້ອອກກິນເບັ້ຍບຳນານໃຫ້ດີ ແລະ ຖືກຕ້ອງທ່ຽງທຳ; ຄົ້ນຄວ້າ ແລະ ວິໄຈກ່ຽວກັບການເຄື່ອນຍ້າຍແຮງງານ ແລະ ຄວາມອາດສາມາດດຸ່ນດ່ຽງແຮງງານ ໃນລະບົບເສດຖະກິດ.

**ມາດຕາ 21.** ໃຫ້ຂະແໜງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ອຳນາດການປົກຄອງທຸກຂັ້ນເອົາໃຈໃສ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແນໃສ່ເຮັດໃຫ້ທົ່ວປະເທດມີຄວາມສະຫງົບຢ່າງໜັກແໜ້ນ; ຕັ້ງໜ້າປະກອບສ່ວນໃນການສ້າງສາພັດທະນາປະເທດຊາດ; ປຸກລະດົມຂົນຂວາຍ ແລະ ຈັດຕັ້ງມະຫາຊົນເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ຮາກຖານ ໃຫ້ກວ້າງຂວາງ; ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມຢ່າງເດັດຂາດ, ເປັນຕົ້ນແມ່ນບັນຫາ ຢາເສບຕິດ, ການຫລິ້ນກິນຟຸມເຟືອຍ, ອຸປະຕິເຫດບົນທ້ອງຖະໜົນ ແລະ ອາຊະຍາກຳຕ່າງໆ ໂດຍມີມາດຕະການປະຕິບັດຢ່າງລະອຽດ ແລະ ເດັດຂາດ.

ມາດຕາ 22. ໃຫ້ກະຊວງຍຸຕິທຳ ສົມທົບກັບບັນດາກະຊວງທີ່ກ່ຽວຂ້ອງ ຄົ້ນຄວ້າເພື່ອສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳອື່ນໆ ທີ່ມີໃນແຜນແລ້ວ; ເພີ່ມທະວີການໂຄສະນາເຜີຍແຜ່ກົດໝາຍ ຢ່າງເປັນລະບົບ ໃຫ້ກວ້າງຂວາງ ແນໃສ່ເຮັດໃຫ້ທົ່ວສັງຄົມຮັບຮູ້, ເຂົ້າໃຈດີຂຶ້ນ ແລະ ມີສະຕິເຄົາລົບກົດໝາຍສູງຂຶ້ນ, ເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍມີຄວາມເປັນເອກະພາບໃນທົ່ວປະເທດ ແລະ ມີຄວາມສັກສິດດີຂຶ້ນ; ປັບປຸງແບບແຜນວິທີເຮັດວຽກ ແລະ ຈັນຍາທຳຂອງພະນັກງານ ແນໃສ່ສ້າງຄວາມເຊື່ອໝັ້ນຂອງສັງຄົມ ຕໍ່ອົງການປົກປ້ອງກົດໝາຍແຕ່ລະຂັ້ນ ໃຫ້ນັບມື້ນັບສູງ.

**ມາດຕາ 23.** ໃຫ້ອົງການກວດກາແຫ່ງລັດ, ອົງການກວດສອບບັນຊີແຫ່ງລັດ ຄົ້ນຄວ້າກົນໄກ ແລະ ລະບຽບການຕິດຕາມກວດກາການປະຕິບັດລາຍຈ່າຍງົບປະມານ ຂອງບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນໃຫ້ເຄັ່ງຄັດກວ່າເກົ່າ ເພື່ອຮັບປະກັນໃຫ້ການປະຕິບັດລາຍຈ່າຍໄປຕາມເປົ້າໝາຍຂອງແຜນການທີ່ໄດ້ອະ

ນຸມັດ; ກວດກາຄວາມຖືກຕ້ອງສອດຄ່ອງໃນການຈັດຕັ້ງ ແລະ ການນຳໃຊ້ທຶນ ຂອງບັນດາກອງທຶນຕ່າງໆ ທີ່ຂະແໜງການສູນກາງ ແລະ ທ້ອງຖິ່ນສ້າງຕັ້ງຂຶ້ນ ເພື່ອເຮັດໃຫ້ລາຍຮັບ ແລະ ລາຍຈ່າຍລວມສູນຜ່ານບັນຊີງົບປະມານແຫ່ງລັດ ຕາມກົດໝາຍກຳນົດໄວ້ ແລະ ເພື່ອເສີມຂະຫຍາຍຄຸນປະໂຫຍດຂອງແຫຼ່ງທຶນຕ່າງໆໄດ້ເປັນຢ່າງດີ; ລົງກວດກາຢ່າງໃກ້ຊິດ ການຈັດຕັ້ງປະຕິບັດຮ່ວງລາຍຮັບ ແລະ ລາຍຈ່າຍຕ່າງໆຂອງງົບປະມານແຫ່ງລັດ ຂອງບັນດາກະຊວງ, ອົງການ ແລະ ແຂວງ ລົງຮອດຂັ້ນເມືອງ ແລະ ບ້ານ; ປະຕິບັດມາດຕະການເຂັ້ມງວດໃນການຕ້ານການສໍ້ລາດບັງຫລວງ ແລະ ເອົາໃຈໃສ່ການຄົ້ນຄວ້າແກ້ໄຂຄຳຮ້ອງທຸກ ຂໍຄວາມເປັນທຳຂອງປະຊາຊົນ.

ມາດຕາ 24. ໃຫ້ຄະນະປັບປຸງທຸລະກິດ ສົມທົບກັບກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ສືບຕໍ່ຄົ້ນຄວ້າ ປັບປຸງວິທີການແກ້ໄຂໜີ້ສິນຂອງລັດວິສາຫະກິດ ໃຫ້ສຳເລັດເປັນກ້າວໆ ເພື່ອໃຫ້ວິສາຫະກິດເຫຼົ່ານັ້ນສາມາດເຄື່ອນໄຫວຢ່າງມີປະສິດທິຜົນດີຂຶ້ນ; ເອົາໃຈໃສ່ປັບປຸງລະບົບບັນຊີຂອງລັດວິສາຫະກິດໃຫ້ຖືກຕ້ອງ ແລະ ຮັບປະກັນຄວາມໂປ່ງໃສ; ສືບຕໍ່ປະຕິບັດແຜນປັບປຸງວິສາຫະກິດຢ່າງຕັ້ງໜ້າ ແລະ ມີຜົນສັກສິດໃນການຈັດຕັ້ງປະຕິບັດແຜນດຳເນີນງານຂອງຕົນ; ເພີ່ມທະວີການປະສານງານລະຫວ່າງພາກສ່ວນຕ່າງໆທີ່ກ່ຽວຂ້ອງໃນການຄຸ້ມຄອງງົບປະມານ; ສືບຕໍ່ຈັດຕັ້ງການກວດກາຄືນ ຖານະການເງິນ, ການຖືຫຸ້ນ ແລະ ເງິນປັນຜົນຂອງລັດວິສາຫະກິດ, ວິສາຫະກິດຮ່ວມທຶນ ແລະ ວິສາຫະກິດປະສົມ ທີ່ລັດມີຕົວແທນ ຫລື ເປັນຜູ້ຖືຫຸ້ນ ໂດຍແຍກໃຫ້ເຫັນລະອຽດ ອັນໃດແມ່ນເງິນປັນຜົນ, ອັນໃດແມ່ນອາກອນ ແລະ ພາສີປະເພດຕ່າງໆ ທີ່ຈະຕ້ອງສົ່ງໃຫ້ລັດຖະບານ ແລະ ອັນໃດແມ່ນລາຍຮັບຂອງລັດວິສາຫະກິດເອງ, ສ້າງຖານຂໍ້ມູນທີ່ກວມເອົາທຸກການເຄື່ອນໄຫວຂອງລັດວິສາຫະກິດ. ຫຼັງຈາກນັ້ນ, ໃຫ້ລາຍງານຕໍ່ລັດຖະບານ ເພື່ອຊອກຊ່ອງທາງປັບປຸງວິສາຫະກິດດັ່ງກ່າວ ແນໃສ່ຫຼຸດຜ່ອນການໃຊ້ຈ່າຍຊໍ້າຊ້ອນ, ຟຸມເຟືອຍ ແລະ ເພື່ອຮັບປະກັນການເກັບລາຍຮັບເຂົ້າງົບປະມານໄດ້ຢ່າງເຕັມສ່ວນ.

ມາດຕາ 25. ມອບໃຫ້ອົງການວິທະຍາສາດ ແລະ ເຕັກໂນໂລຊີ ສົມທົບກັບມະຫາວິທະຍາໄລແຫ່ງຊາດ ແລະ ສະຖາບັນຄົ້ນຄ້ວາວິທະຍາສາດ ດຳເນີນໂຄງການຄົ້ນຄວ້າວິທະຍາສາດການນຳໃຊ້ ສຳລັບຂະແໜງທີ່ເຫັນວ່າເໝາະສົມ ສຳລັບ ສປປ ລາວ; ໃນນີ້, ນັບທັງໂຄງການຮ່ວມມືຄົ້ນຄວ້າກັບສາກົນ, ໂຄງການກໍ່ສ້າງນັກຄົ້ນຄວ້າໃນດ້ານຕ່າງໆ ທັງຢູ່ພາຍໃນ ແລະ ຕ່າງປະເທດ; ສ້າງແຜນລະດົມແຫຼ່ງທຶນເຂົ້າໃນການຄົ້ນຄວ້າວິທະຍາສາດເຕັກນິກຈາກພາຍໃນ ສົມທົບກັບການຍາດແຍ່ງການຊ່ວຍເຫຼືອ ຈາກຕ່າງປະເທດ; ສ້າງແຜນນຳໃຊ້ຜົນສຳເລັດດ້ານວິທະຍາສາດຂອງໂລກເຂົ້າໃນການພັດທະນາ; ຄົ້ນຄວ້າ ແລະ ສົ່ງເສີມພູມປັນຍາຂອງປະຊາຊົນເຂົ້າໃນການຜະລິດ, ການບໍລິການ ແລະ ການດຳລົງຊີວິດທີ່ດີ ເພື່ອສົ່ງເສີມ ແລະ ເຜີຍແຜ່ຢ່າງກວ້າງຂວາງ; ເອົາໃຈໃສ່ຈັດຕັ້ງການປະຕິບັດ ແລະ ເຜີຍແຜ່ກົດໝາຍ ແລະ ລະບຽບການຕ່າງໆກ່ຽວກັບສິ່ງແວດລ້ອມ ແລະ ກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ ເພື່ອມອບໃຫ້ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ປຸກລະດົມຈິດສຳນຶກຂອງປວງຊົນ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ເປັນຕົ້ນແມ່ນການຮັກສາແຫຼ່ງນໍ້າ ແລະ ການຈຳກັດມົນລະພິດ..

ມາດຕາ 26. ໃຫ້ອົງການທ່ອງທ່ຽວແຫ່ງຊາດ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງໂຄງການປັບປຸງການບໍລິການທ່ອງທ່ຽວໃຫ້ໄດ້ມາດຕະຖານເພື່ອດຶງດູດນັກທ່ອງທ່ຽວເພີ່ມຂຶ້ນ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາ

ຊົນ ແລະ ທັງເປັນການເຮັດຂາອອກກັບທີ່ຢູ່ແຕ່ລະທ້ອງຖິ່ນ; ປະຕິບັດການອອກວີຊາກັບດ່ານໃຫ້ກວ້າງກວ່າເກົ່າ ພ້ອມທັງເອົາໃຈໃສ່ສ້າງແຜນພັດທະນາການທ່ອງທ່ຽວ; ເອົາໃຈໃສ່ກໍ່ສ້າງໂຄງລ່າງພື້ນຖານທ່ອງທ່ຽວໃຫ້ຫຼາຍຂຶ້ນ, ປຸກລະດົມໃຫ້ທຸກພາກສ່ວນເອົາໃຈໃສ່ວຽກງານການທ່ອງທ່ຽວ ແນໃສ່ເຮັດໃຫ້ຂະແໜງດັ່ງກ່າວເປັນຂະແໜງບູລິມະສິດ ທີ່ປະກອບສ່ວນໃຫ້ການເຕີບໂຕຂອງເສດຖະກິດ ແລະ ການສ້າງລາຍໄດ້ໃຫ້ປະຊາຊົນຢູ່ໃນທ້ອງຖິ່ນ.

**ມາດຕາ 27.** ໃຫ້ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ຄົ້ນຄວ້າປັບປຸງນະໂຍບາຍ ແລະ ມາດຕະການຕ່າງໆ ໃນການຜັນຂະຫຍາຍກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ, ການແບ່ງ ແລະ ມອບສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ສອດຄ່ອງ, ລະອຽດຈະແຈ້ງໃນການຄຸ້ມຄອງເສດຖະກິດ-ສັງຄົມ; ສົມທົບກັບກະຊວງການເງິນ ແລະ ຫ້ອງການປັບປຸງທຸລະກິດ ຂອງສຳນັກງານນາຍົກລັດຖະມົນຕີ ຄົ້ນຄວ້ານະໂຍບາຍເງິນເດືອນຂອງພະນັກງານ ແລະ ກຳມະກອນຢູ່ຂົງເຂດລັດວິສາຫະກິດ ເພື່ອເຮັດໃຫ້ພະນັກງານ, ກຳມະກອນດັ່ງກ່າວ ມີລະດັບເງິນເດືອນທີ່ສົມເຫດສົມຜົນ.

**ມາດຕາ 28.** ໃຫ້ອົງການຄຸ້ມຄອງທີ່ດິນແຫ່ງຊາດ ຈັດຕັ້ງສຳຫຼວດຈັດສັນທີ່ດິນ , ຈັດແບ່ງເຂດ, ແບ່ງປະເພດ, ສ້າງແຜນນຳໃຊ້ທີ່ດິນ; ວາງແຜນຂອບຜັງເມືອງ ແລະ ຂອບເຂດທີ່ຢູ່ອາໃສ, ແຜນປົກປັກຮັກສາ ແລະ ນຳໃຊ້ທີ່ດິນ ເພື່ອສະເໜີລັດຖະບານ ພິຈາລະນາ ແລະ ຜ່ານສະພາຮັບຮອງເອົາ ຕາມທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍທີ່ດິນ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ.

ມາດຕາ 29. ໃຫ້ຄະນະກຳມະການກິລາແຫ່ງຊາດເອົາໃຈໃສ່ຊຸກຍູ້ສົ່ງເສີມຂະບວນກິລາ ແລະ ພັດທະນາກິລາລາວໃຫ້ມີລະດັບສູງຂຶ້ນທາງດ້ານປະລິມານ ແລະ ຄຸນນະພາບ, ກະກຽມເງື່ອນໄຂໃນທຸກດ້ານໃຫ້ແກ່ການເປັນເຈົ້າພາບຊີເກມ ຄັ້ງທີ 25 ໃຫ້ສຳເລັດທັນຕາມກຳນົດເວລາ ຕາມແຜນທີ່ໄດ້ວາງອອກ.

**ມາດຕາ 30.** ໃຫ້ບັນດາກະຊວງ, ອົງການ, ແຂວງ ແລະ ເມືອງ ອີງໃສ່ພາລະບົດບາດຂອງຕົນຄົ້ນຄວ້າສ້າງວິທີການ ແລະ ມາດຕະການທີ່ລະອຽດ ສອດຄ່ອງ ເພື່ອປະຕິບັດນະໂຍບາຍ ແລະ ກົດໝາຍຕ່າງໆ ເພື່ອສ້າງເງື່ອນໄຂລະດົມ ແລະ ສົ່ງເສີມທຸກພາກສ່ວນເສດຖະກິດເຂົ້າຮ່ວມໃນການລົງທຶນຜະລິດສິນຄ້າ ແລະ ບໍລິການ ໃນຂະແໜງການ ແລະ ທ້ອງຖິ່ນຂອງຕົນ.

**ມາດຕາ 31.** ໃຫ້ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ຂອງຄະນະກຳມະການແຜນການ ແລະ ການລົງທຶນ ແລະ ສະຖາບັນອື່ນໆ ດຳເນີນການຄົ້ນຄວ້າ ເພື່ອຮັບໃຊ້ໃຫ້ແກ່ການວາງແຜນ ແລະ ຄຸ້ມຄອງເສດຖະກິດ-ສັງຄົມ ໂດຍມີການຈັດສຳມະນາ, ເຜີຍແຜ່, ແລກປ່ຽນບົດຮຽນ ລະຫວ່າງ ຂະແໜງການຕ່າງໆ ທີ່ກ່ຽວຂ້ອງ ເພື່ອໃຫ້ມີຂໍ້ມູນຂ່າວສານຮັບໃຊ້ໃຫ້ແກ່ການຄົ້ນຄວ້າ, ສິດສອນ, ໃຫ້ຄຳປຶກສາ, ເຝິກອົບຮົມ ໃນສະຖາບັນການສຶກສາ, ເວທີສຳມະນາ ແລະ ຮູບການອື່ນໆ.

**ມາດຕາ 32.** ຫ້າມເດັດຂາດ ບໍ່ໃຫ້ຂະແໜງການໃດ, ທ້ອງຖິ່ນໃດຫຼຸດຜ່ອນ ຫຼື ຍົກເວັ້ນພາສີອາກອນ ແລະ ຄ່າທຳນຽມທຸກປະເພດຕາມລຳພັງ. ທຸກການຍົກເວັ້ນ ຫຼື ຫຼຸດຜ່ອນພາສີອາກອນ ແລະ ພັນທະອື່ນໆ ຕໍ່ງົບປະມານແຫ່ງລັດ ແມ່ນລັດຖະບານເປັນຜູ້ຕົກລົງ ໂດຍຜ່ານການຄົ້ນຄວ້າ-ສະເໜີຂອງກະຊວງການເງິນ.

ຖ້າຂະແໜງການໃດ ຫຼື ທ້ອງຖິ່ນໃດຫາກຝ່າຝືນ ແມ່ນຈະຖືກພິຈາລະນາດ້ານວິໄນຢ່າງເຂັ້ມງວດ. ຫ້າມບໍ່ໃຫ້ບຸກຄົນ ແລະ ການຈັດຕັ້ງ ເກັບຄ່າທຳນຽມ ແລະ ຄ່າບໍລິການ ທີ່ບໍ່ມອບຢູ່ໃນລະບຽບກົດໝາຍ. ບັນດາຂະແໜງການ ແລະ ທ້ອງຖິ່ນ ກ່ອນຈະອະນຸມັດເຊັນສັນຍາປະຕິບັດໂຄງການຕ່າງໆ ຕ້ອງໄດ້ຄຳນຶງເຖິງລະບຽບກົດໝາຍກ່ຽວກັບພາສີ, ສ່ວຍສາອາກອນ ແລະ ການສົ່ງເສີມການລົງທຶນພາຍໃນ ແລະ ລົງທຶນຕ່າງປະເທດ ທີ່ໄດ້ປະກາດໃຊ້ແລ້ວ.

**ມາດຕາ 33.** ໃຫ້ຄະນະກຳມະການແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງ ຂະແໜງການອື່ນໆ ສ້າງບົດແນະນຳ ກ່ຽວກັບວິທີຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ສ້າງແຜນດຳເນີນງານລະອຽດ ດ້ານວິຊາສະເພາະທີ່ກ່ຽວຂ້ອງຂອງຕົນ ສຳລັບສົກປີ 2007-2008 ນັບແຕ່ສູນກາງ ລົງຮອດທ້ອງຖິ່ນ; ພ້ອມກັນນັ້ນ, ກໍ່ໃຫ້ເອົາໃຈໃສ່ໂຄສະນາເຜີຍແຜ່ ຜ່ານລະບົບສື່ມວນຊົນຕ່າງໆ ນັບແຕ່ເດືອນສິງຫາ 2007 ເປັນຕົ້ນໄປ.

**ມາດຕາ 34.** ໃຫ້ກະຊວງຂະແໜງການ, ອົງການທຽບເທົ່າ, ນະຄອນຫລວງວຽງຈັນ, ແຂວງຕ່າງໆ ດຳເນີນການສະຫຼຸບຕີລາຄາການຈັດຕັ້ງປະຕິບັດຂາດຕົວ ແຜນພັດທະນາເສດຖະກິດ-ສັງຄົມ ລວມທັງແຜນການລົງທຶນຂອງລັດ ແລະ ແຜນງົບປະມານແຫ່ງລັດ ສົກປີ 2006-2007 ສົ່ງໃຫ້ຄະນະກຳມະການແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ກ່ອນວັນທີ 15 ມັງກອນ 2008; ເອົາໃຈໃສ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດ ສົກປີ 2007-2008 ທີ່ສະພາຮັບຮອງເອົາແລ້ວນັ້ນ ໃຫ້ໄດ້ຮັບຜົນດີ, ພ້ອມທັງລາຍງານຜົນການຈັດຕັ້ງປະຕິບັດຂອງຕົນ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຢ່າງຄົບຖ້ວນ ແລະ ທັນຕາມກຳນົດເວລາ.

**ມາດຕາ 35.** ມອບໃຫ້ບັນດາທ່ານລັດຖະມົນຕີວ່າການກະຊວງ , ຫົວໜ້າອົງການທຽບເທົ່າ, ເຈົ້າຄອງນະຄອນຫຼວງ ແລະ ບັນດາເຈົ້າແຂວງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ ໃຫ້ລັດຖະບານ ໃນແຕ່ລະໄລຍະຢ່າງເປັນປົກກະຕິ.

**ມາດຕາ 36.** ດຳລັດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ວັນທີ 1 ຕຸລາ 2007 ເປັນຕົ້ນໄປ.

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ